ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 022 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 28/11/2016

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ( ສະບັບປັບປຸງ )**

---

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ( ສະບັບປັບປຸງ ປີ 2015 ) ໝວດທີ VI ມາດຕາ 67 ຂໍ້ 01;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 017/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 04/ຄປຈ, ລົງວັນທີ 15 ມັງກອນ 2016.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

ມາດຕາ 1. ປະກາດໃຊ້ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ( ສະບັບປັບປຸງ ).

ມາດຕາ 2. ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 017 /ສພຊ

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ (ສະບັບປັບປຸງ)

---

ອີງຕາມມາດຕາ 53 ຂໍ້ 1 ຂອງລັດຖະທຳມະນູນ ( ສະບັບປັບປຸງ ປີ 2015 ) ແລະ ມາດຕາ 11 ຂໍ້ 1 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ( ສະບັບປັບປຸງ ປີ 2015 ) ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າ ພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນບ່າຍ ຂອງວັນທີ 14 ທັນວາ 2015

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີ ເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 14 ທັນວາ 2015

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 68 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 14 ທັນວາ 2015

# ກົດໝາຍ
# ວ່າດ້ວຍ ການປົກຄອງທ້ອງຖິ່ນ (ສະບັບປັບປຸງ)
## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ ແລະ ລະບອບແບບແຜນວິທີເຮັດວຽກຂອງອົງການປົກຄອງທ້ອງຖິ່ນ ເພື່ອປັບປຸງ ແລະ ສ້າງອົງການປົກຄອງທ້ອງຖິ່ນ ໃຫ້ມີຄວາມໜັກແໜ້ນ ເຂັ້ມແຂງ, ໂປ່ງໃສ ແລະ ເປັນລະບົບໃນທົ່ວປະເທດ ແນໃສ່ຮັບປະກັນການປະຕິບັດ ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານການຕ່າງປະເທດ ຕາມການແບ່ງຂັ້ນຄຸ້ມຄອງ; ປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ ປະກອບສ່ວນເຮັດໃຫ້ປະຊາຊົນຮັ່ງມີ ຜາສຸກ, ປະເທດຊາດ ມັ່ງຄັ່ງ ເຂັ້ມແຂງ, ສັງຄົມ ສາມັກຄີ ປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

**ມາດຕາ 2 (ປັບປຸງ) ການປົກຄອງທ້ອງຖິ່ນ**

ການປົກຄອງທ້ອງຖິ່ນ ແມ່ນ ການຄຸ້ມຄອງບໍລິຫານລັດຂັ້ນທ້ອງຖິ່ນ.

ການປົກຄອງທ້ອງຖິ່ນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແບ່ງອອກເປັນ ສາມຂັ້ນ ຄື ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ.

ຂັ້ນແຂວງ ມີ ແຂວງ, ນະຄອນຫຼວງ;
ຂັ້ນເມືອງ ມີ ເມືອງ, ເທດສະບານ, ນະຄອນ;
ຂັ້ນບ້ານ ມີ ບ້ານ.

**ມາດຕາ 3 (ປັບປຸງ) ຫຼັກການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງທ້ອງຖິ່ນ**

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງທ້ອງຖິ່ນ ໃຫ້ປະຕິບັດຕາມຫຼັກການຕົ້ນຕໍ ດັ່ງນີ້:

1. ລວມສູນເປັນເອກະພາບໃນການຄຸ້ມຄອງລັດ ທີ່ມີການແບ່ງຂັ້ນຄຸ້ມຄອງ, ຂັ້ນບ້ານ ຂຶ້ນກັບຂັ້ນເມືອງ, ຂັ້ນເມືອງ ຂຶ້ນກັບຂັ້ນແຂວງ, ຂັ້ນແຂວງ ຂຶ້ນກັບລັດຖະບານ;

2. ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ, ເພີ່ມຄວາມຮັບຜິດຊອບຂອງອົງການປົກຄອງທ້ອງຖິ່ນ ແລະ ການມີສ່ວນຮ່ວມຂອງປະຊາຊົນ ໂດຍຜ່ານສະພາປະຊາຊົນທ້ອງຖິ່ນ;

3. ຮັບຜິດຊອບບົນພື້ນຖານລັດຖະທຳມະນູນ ແລະ ກົດໝາຍ.

## ພາກທີ II
## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການປົກຄອງທ້ອງຖິ່ນ

### ມາດຕາ 4 (ປັບປຸງ) ທີ່ຕັ້ງ

ອົງການປົກຄອງທ້ອງຖິ່ນ ແມ່ນ ອົງການບໍລິຫານລັດຂັ້ນທ້ອງຖິ່ນ, ເປັນຕົວແທນຂອງລັດຖະບານ, ມີຄວາມຮັບຜິດຊອບຕໍ່ລັດຖະບານ ແລະ ສະພາປະຊາຊົນທ້ອງຖິ່ນ.

ອົງການປົກຄອງທ້ອງຖິ່ນ ປະກອບດ້ວຍ:

1. ອົງການປົກຄອງ ແຂວງ, ນະຄອນຫຼວງ;
2. ອົງການປົກຄອງເມືອງ, ເທດສະບານ, ນະຄອນ;
3. ອົງການປົກຄອງບ້ານ.

ໃນກໍລະນີຈຳເປັນ ອາດຈະສ້າງເຂດພິເສດຂຶ້ນ ຕາມການຕົກລົງຂອງສະພາແຫ່ງຊາດ.

ຫົວໜ້າອົງການປົກຄອງແຂວງ ແມ່ນ ເຈົ້າແຂວງ, ຫົວໜ້າອົງການປົກຄອງນະຄອນຫຼວງ ແມ່ນ ເຈົ້າຄອງນະຄອນຫຼວງ, ຫົວໜ້າອົງການປົກຄອງເມືອງ ແມ່ນ ເຈົ້າເມືອງ, ຫົວໜ້າອົງການປົກຄອງເທດສະບານ ແມ່ນ ຫົວໜ້າເທດສະບານ, ຫົວໜ້າອົງການປົກຄອງນະຄອນ ແມ່ນ ເຈົ້ານະຄອນ, ຫົວໜ້າອົງການປົກຄອງບ້ານ ແມ່ນ ນາຍບ້ານ.

### ມາດຕາ 5 (ປັບປຸງ) ພາລະບົດບາດ

ອົງການປົກຄອງທ້ອງຖິ່ນ ມີ ພາລະບົດບາດຄຸ້ມຄອງບໍລິຫານລັດ ທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການສ້າງ ແລະ ນຳໃຊ້ຊັບພະຍາກອນມະນຸດ, ການນຳໃຊ້ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນ; ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນທ້ອງຖິ່ນ ແລະ ວຽກງານການຕ່າງປະເທດ ຕາມການແບ່ງຂັ້ນຄຸ້ມຄອງ.

### ມາດຕາ 6 (ປັບປຸງ) ສິດ ແລະ ໜ້າທີ່

ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ດຳລັດ, ມະຕິ, ຄຳສັ່ງ, ຄຳແນະນຳ, ຂໍ້ຕົກລົງຂອງຂັ້ນເທິງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ;
2. ຄົ້ນຄວ້າ ແລະ ສະເໜີ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງທ້ອງຖິ່ນຕໍ່ສະພາປະຊາຊົນທ້ອງຖິ່ນ ເພື່ອພິຈາລະນາ;
3. ຄຸ້ມຄອງບໍລິຫານທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ອື່ນໆ;
4. ອອກມະຕິ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການຄຸ້ມຄອງເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

5. ຕິດຕາມ ກວດກາການປະຕິບັດໜ້າທີ່ວຽກງານຂອງອົງການຈັດຕັ້ງ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

6. ຄຸ້ມຄອງພົນລະເມືອງ, ຄົນຕ່າງດ້າວ, ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວຢູ່ທ້ອງຖິ່ນຂອງຕົນ;

7. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການມອບໝາຍ ຂອງລັດຖະບານ;

8. ສະຫຼຸບ, ລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງຕົນ ລວມທັງສະພາບການຮອບດ້ານຂອງທ້ອງຖິ່ນ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

# ພາກທີ III
# ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ
## ໝວດທີ 1
## ແຂວງ, ນະຄອນຫຼວງ ແລະ ການສ້າງຕັ້ງແຂວງ, ນະຄອນຫຼວງ

**ມາດຕາ 7 (ປັບປຸງ) ແຂວງ, ນະຄອນຫຼວງ**

ແຂວງ, ນະຄອນຫຼວງ ແມ່ນ ເຂດການປົກຄອງທ້ອງຖິ່ນ ຊຶ່ງປະກອບດ້ວຍຫຼາຍເມືອງ, ເທດສະບານ, ນະຄອນ.

**ມາດຕາ 8 ການສ້າງຕັ້ງແຂວງ, ນະຄອນຫຼວງ**

ແຂວງ, ນະຄອນຫຼວງ ຖືກສ້າງຕັ້ງ, ຍຸບເລີກ, ແຍກອອກ, ໂຮມເຂົ້າ ຫຼື ກຳນົດເຂດແດນ ໂດຍການຕົກລົງຂອງສະພາແຫ່ງຊາດ ຕາມການສະເໜີຂອງລັດຖະບານ.

**ມາດຕາ 9 (ປັບປຸງ) ເງື່ອນໄຂການສ້າງຕັ້ງແຂວງ, ນະຄອນຫຼວງ**

ໃນການສ້າງຕັ້ງແຂວງ, ນະຄອນຫຼວງ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີທີ່ຕັ້ງດ້ານພູມສາດເໝາະສົມແກ່ການປົກຄອງ, ເປັນທີ່ຕັ້ງຍຸດທະສາດ ໃນການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

2. ມີປັດໄຈພື້ນຖານສຳລັບການພັດທະນາເສດຖະກິດ-ສັງຄົມ;

3. ມີພື້ນຖານໂຄງລ່າງທີ່ຂະຫຍາຍຕົວ ເຊັ່ນ ຖະໜົນຫົນທາງ, ໂທລະຄົມມະນາຄົມ, ຕະຫຼາດ, ໄຟຟ້າ, ນ້ຳປະປາ, ໂຮງຮຽນ, ໂຮງໝໍ ແລະ ອື່ນໆ;

4. ມີພົນລະເມືອງ ທີ່ດຳລົງຊີວິດຢູ່ໃນທ້ອງຖິ່ນນັ້ນ ຢ່າງໜ້ອຍ ໜຶ່ງຮ້ອຍຊາວພັນຄົນ;

5. ມີຫ້າໜ່ວຍການປົກຄອງຂັ້ນເມືອງຂຶ້ນໄປ.

ໃນກໍລະນີຈຳເປັນ ຈະສ້າງຕັ້ງແຂວງນັ້ນ ລັດຖະບານ ເປັນຜູ້ສະເໜີ ຕໍ່ສະພາແຫ່ງຊາດ ພິຈາລະນາຕົກລົງ.

# ໝວດທີ2
## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການປົກຄອງແຂວງ, ນະຄອນຫຼວງ

**ມາດຕາ 10 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ**

ອົງການປົກຄອງແຂວງ, ນະຄອນຫຼວງ ແມ່ນ ອົງການບໍລິຫານລັດຂັ້ນແຂວງ ຊຶ່ງມີພາລະບົດບາດ ຄຸ້ມຄອງບໍລິຫານລັດທາງດ້ານການເມືອງ, ການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານການຕ່າງປະເທດ; ສ້າງ ແລະ ນຳໃຊ້ຊັບພະຍາກອນມະນຸດ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນໃນທ້ອງຖິ່ນ; ຊີ້ນຳ, ກວດກາການຈັດຕັ້ງປະຕິບັດແຜນຍຸດທະສາດການພັດທະນາເມືອງ, ເທດສະບານ, ນະຄອນ ໃນຂອບເຂດການຄຸ້ມຄອງຂອງຕົນ, ປະຕິບັດມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ.

**ມາດຕາ 11 (ໃໝ່) ສິດ ແລະ ໜ້າທີ່**

ອົງການປົກຄອງແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບປະກັນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ດຳລັດ, ລະບຽບການ, ຄຳສັ່ງ, ຄຳແນະນຳ, ມະຕິກອງປະຊຸມຂອງອົງການປົກຄອງແຂວງ, ນະຄອນຫຼວງ ແລະ ສະພາປະຊາຊົນຂັ້ນແຂວງ;
2. ສ້າງ ແລະ ຈັດຕັ້ງປະຕິບັດ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງທ້ອງຖິ່ນ; ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຕ້ານ ແລະ ສະກັດກັ້ນການສໍ້ລາດບັງຫຼວງ ແລະ ປາກົດການຫຍໍ້ທໍ້ອື່ນ ໃນສັງຄົມ;
3. ຊີ້ນຳ, ຊຸກຍູ້, ປຸກລະດົມ ກ່ຽວກັບວຽກງານເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ;
4. ຊຸກຍູ້, ລະດົມແຫຼ່ງທຶນເຂົ້າໃສ່ການປະຕິບັດຍຸດທະສາດ ປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ສາທາລະນະສຸກ ຢູ່ທ້ອງຖິ່ນ;
5. ປົກປັກຮັກສາ, ສົ່ງເສີມວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ທ້ອງຖິ່ນ ແລະ ຂອງເຜົ່າ; ຄຸ້ມຄອງ ແລະ ພັດທະນາສະຖານທີ່ທ່ອງທ່ຽວທາງດ້ານປະຫວັດສາດ, ວັດທະນະທຳ ແລະ ທຳມະຊາດ ພາຍໃນແຂວງ, ນະຄອນຫຼວງ;
6. ນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການຄຸ້ມຄອງບໍລິຫານລັດ; ປັບປຸງລະບຽບການ, ກົນໄກການບໍລິຫານລັດ ໃຫ້ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ;
7. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ; ສັ່ງໂຈະ ຫຼື ຍົກເລີກນິຕິກຳອື່ນ ຂອງທຸກຂະແໜງການ ຢູ່ໃນຂັ້ນຂອງຕົນ ຫຼື ຂັ້ນລຸ່ມ ທີ່ຂັດກັບກົດໝາຍ ຍົກເວັ້ນຄຳຕົກລົງກ່ຽວກັບການດຳເນີນຄະດີຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນທ້ອງຖິ່ນ; ສະເໜີຂັ້ນເທິງພິຈາລະນາໂຈະ ຫຼື ຍົກເລີກນິຕິກຳຂອງຂະແໜງການ ທີ່ຂັດກັບກົດໝາຍ;
8. ແບ່ງໜ້າທີ່ຮັບຜິດຊອບ, ສິດຕັດສິນບັນຫາ ແລະ ຜົນປະໂຫຍດໃຫ້ເມືອງ, ເທດສະບານ, ນະຄອນ ໃຫ້ຈະແຈ້ງ ແລະ ຂາດຕົວ;
9. ຈັດຕັ້ງ, ອຳນວຍ, ຄວບຄຸມ ແລະ ຕິດຕາມກວດກາການເຄື່ອນໄຫວປະຕິບັດໜ້າທີ່ຂອງພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ, ການເຄື່ອນໄຫວປະຕິບັດໜ້າທີ່ຂອງ ເມືອງ, ເທດສະບານ, ນະຄອນ ແລະ ຫົວໜ່ວຍການຈັດຕັ້ງອື່ນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;

10. ອຳນວຍຄວາມສະດວກ ແລະ ຕິດຕາມ, ກວດກາການປະຕິບັດທຶນຊ່ວຍເຫຼືອ ແລະ ໂຄງການລົງທຶນ ທີ່ສູນກາງຄຸ້ມຄອງ; ສົ່ງເສີມການລົງທຶນຂອງທຸກພາກສ່ວນເສດຖະກິດທັງພາຍໃນ ແລະ ຕ່າງປະເທດທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

11. ຊີ້ນຳ ກວດກາການຄຸ້ມຄອງພົນລະເມືອງ, ຄົນຕ່າງດ້າວ, ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ, ວຽກງານເຜົ່າ ແລະ ສາສະໜາ; ປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ;

12. ພິຈາລະນາ, ໃຫ້ຄຳແນະນຳ ແລະ ແກ້ໄຂຄຳສະເໜີຂອງການຈັດຕັ້ງ ແລະ ບຸກຄົນ ກ່ຽວກັບການກະທຳຂອງພະນັກງານ-ລັດຖະກອນ ແລະ ອົງການບໍລິຫານລັດໃນທ້ອງຖິ່ນຂອງຕົນ;

13. ຄົ້ນຄວ້າໂຄງປະກອບການຈັດຕັ້ງ ແລະ ການກຳນົດເຂດແດນຂອງ ແຂວງ, ນະຄອນຫຼວງ; ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ກຳນົດເຂດແດນຂອງ ເມືອງ, ເທດສະບານ, ນະຄອນ;

14. ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ທຸກພາກສ່ວນເສດຖະກິດ ແລະ ປະຊາຊົນລາວບັນດາເຜົ່າ ເຂົ້າຮ່ວມໃນການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຕ້ານປາກົດການຫຍໍ້ທໍ້ ຢູ່ໃນທ້ອງຖິ່ນຕົນ;

15. ຄຸ້ມຄອງການຈັດຕັ້ງ, ພະນັກງານ-ລັດຖະກອນ; ຕິດຕາມກວດກາການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ, ພະແນກສາຍຕັ້ງທີ່ປະຈຳຢູ່ທ້ອງຖິ່ນຂອງຕົນໃຫ້ກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ;

16. ສ້າງ, ບຳລຸງ, ຍົກລະດັບຄວາມຮູ້, ຄວາມສາມາດດ້ານການເມືອງ, ການປົກຄອງ, ວິຊາສະເພາະ ແລະ ພາສາຕ່າງປະເທດ ໃຫ້ພະນັກງານ-ລັດຖະກອນຂອງຕົນ;

17. ຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ ແລະ ພັດທະນາຊັບພະຍາກອນທຳມະຊາດ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອສ້າງແຫຼ່ງລາຍຮັບ ແລະ ຈັດເກັບລາຍຮັບໃຫ້ຖືກຕ້ອງ;

18. ອຳນວຍ, ຄວບຄຸມ ໃຫ້ອົງການລັດທີ່ກ່ຽວຂ້ອງປະຕິບັດການສ້າງລາຍຮັບໃຫ້ຖືກຕ້ອງ, ຄົບຖ້ວນ, ທັນເວລາ ແລະ ໂປ່ງໃສ; ຄຸ້ມຄອງ ແລະ ປະຕິບັດແຜນລາຍຮັບ-ລາຍຈ່າຍ ຂອງທ້ອງຖິ່ນ;

19. ພົວພັນ ແລະ ຮ່ວມມືກັບຕ່າງປະເທດຕາມການມອບໝາຍຂອງຂັ້ນເທິງ;

20. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນ ລວມທັງສະພາບການຮອບດ້ານຂອງທ້ອງຖິ່ນ ໃຫ້ລັດຖະບານ ແລະ ສະພາປະຊາຊົນຂັ້ນແຂວງ ຢ່າງເປັນປົກກະຕິ;

21. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ3
## ໂຄງປະກອບການຈັດຕັ້ງຂອງອົງການປົກຄອງແຂວງ, ນະຄອນຫຼວງ

**ມາດຕາ 12 (ປັບປຸງ) ໂຄງປະກອບກົງຈັກ**

ອົງການປົກຄອງແຂວງ, ນະຄອນຫຼວງ ມີ ໂຄງປະກອບກົງຈັກ ດັ່ງນີ້:

1. ຫ້ອງວ່າການແຂວງ, ນະຄອນຫຼວງ;

2. ພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ຊຶ່ງສ້າງຕັ້ງຂຶ້ນຕາມຄວາມຮຽກຮ້ອງຕ້ອງການຕົວຈິງຂອງວຽກງານ ໂດຍການຮັບຮອງຂອງສະພາປະຊາຊົນຂັ້ນແຂວງ.

**ມາດຕາ 13 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດຂອງຫ້ອງວ່າການແຂວງ, ນະຄອນຫຼວງ**

ຫ້ອງວ່າການແຂວງ, ນະຄອນຫຼວງ ແມ່ນ ໂຄງປະກອບກົງຈັກໜຶ່ງ ຂອງອົງການປົກຄອງຂັ້ນແຂວງ ຊຶ່ງມີພາລະບົດບາດເປັນເສນາທິການໃຫ້ແກ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ໃນການອໍານວຍຄວບຄຸມ, ຊຸກຍູ້, ຕິດຕາມການບໍລິຫານວຽກງານຂອງ ແຂວງ, ນະຄອນຫຼວງ, ສ້າງແຜນການ, ໂຄງການດໍາເນີນງານ, ຄົ້ນຄວ້າສັງລວມ, ຄຸ້ມຄອງເອກະສານ, ເປັນໃຈກາງພົວພັນປະສານງານ, ບໍລິຫານຮັບໃຊ້ການເຄື່ອນໄຫວວຽກງານໃຫ້ແກ່ການນໍາຂອງ ແຂວງ, ນະຄອນຫຼວງ ແລະ ການຄຸ້ມຄອງບໍລິຫານວຽກງານພາຍໃນຂອງຕົນ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການແຂວງ, ນະຄອນຫຼວງ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 14 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ຂອງພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ**

ພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ແມ່ນ ໂຄງປະກອບກົງຈັກໜຶ່ງ ຂອງອົງການປົກຄອງແຂວງ, ນະຄອນຫຼວງ ຊຶ່ງມີພາລະບົດບາດເປັນເສນາທິການໃຫ້ອົງການປົກຄອງແຂວງ, ນະຄອນຫຼວງ, ກະຊວງ, ອົງການລັດທຽບເທົ່າກະຊວງ ທາງດ້ານວິຊາການ ແລະ ຄຸ້ມຄອງບໍລິຫານລັດຕາມການແບ່ງຂັ້ນຄຸ້ມຄອງ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 15 (ປັບປຸງ) ໂຄງປະກອບບຸກຄະລາກອນ**

ອົງການປົກຄອງແຂວງ, ນະຄອນຫຼວງ ປະກອບດ້ວຍບຸກຄະລາກອນ ດັ່ງນີ້:

1. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
2. ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ;
3. ຫົວໜ້າຫ້ອງວ່າການ, ຫົວໜ້າພະແນກ ແລະ ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ.

**ມາດຕາ 16 (ປັບປຸງ) ການແຕ່ງຕັ້ງ ຫຼື ປົດຕໍາແໜ່ງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ**

ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຖືກແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ໂດຍນາຍົກລັດຖະມົນຕີ ພາຍຫຼັງສະພາປະຊາຊົນຂັ້ນແຂວງ ໄດ້ເລືອກຕັ້ງ ຫຼື ປົດຕໍາແໜ່ງແລ້ວ.

**ມາດຕາ 17 (ປັບປຸງ) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ**

ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພາຍຫຼັງສະພາປະຊາຊົນຂັ້ນແຂວງ ໄດ້ຮັບຮອງເອົາ.

**ມາດຕາ 18 (ປັບປຸງ) ອາຍຸການຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ**

ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ມີ ອາຍຸການສະໄໝລະຫ້າປີ ແລະ ສາມາດດໍາລົງຕໍາແໜ່ງ ຢູ່ບ່ອນເກົ່າໄດ້ບໍ່ເກີນ ສອງສະໄໝ ຕິດຕໍ່ກັນ.

ໃນກໍລະນີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຫາກໝົດອາຍຸການແລ້ວ ແຕ່ນາຍົກລັດຖະມົນຕີ ຍັງບໍ່ທັນໄດ້ແຕ່ງຕັ້ງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຜູ້ໃໝ່ນັ້ນ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຜູ້ເກົ່າສືບຕໍ່ປະຕິບັດໜ້າທີ່ຂອງຕົນຈົນກວ່າຈະມີການແຕ່ງຕັ້ງຜູ້ໃໝ່.

ການແຕ່ງຕັ້ງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຜູ້ໃໝ່ຕ້ອງດຳເນີນພາຍໃນ ເກົ້າສິບວັນ ຫຼັງຈາກອາຍຸການຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຜູ້ເກົ່າສິ້ນສຸດລົງ.

## ໝວດທີ 4
## ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ

### ມາດຕາ 19 (ປັບປຸງ) ພາລະບົດບາດ

ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຫົວໜ້າອົງການປົກຄອງຂັ້ນແຂວງ, ເປັນຕົວແທນ ແລະ ຮັບຜິດຊອບຕໍ່ລັດຖະບານ ແລະ ສະພາປະຊາຊົນຂັ້ນແຂວງ, ຊີ້ນຳອົງການປົກຄອງຂັ້ນແຂວງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ແລະ 11 ຂອງກົດໝາຍສະບັບນີ້.

### ມາດຕາ 20 (ປັບປຸງ) ສິດ ແລະ ໜ້າທີ່

ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮຽກໂຮມ ແລະ ເປັນປະທານກອງປະຊຸມອົງການປົກຄອງແຂວງ, ນະຄອນຫຼວງ;
2. ຊີ້ນຳ, ອຳນວຍຄວບຄຸມວຽກງານຂອງອົງການປົກຄອງແຂວງ, ນະຄອນຫຼວງ; ກວດກາການປະຕິບັດ ມະຕິຂອງສະພາປະຊາຊົນຂັ້ນແຂວງ, ມະຕິຂອງກອງປະຊຸມອົງການປົກຄອງແຂວງ, ນະຄອນຫຼວງ ແລະ ການເຄື່ອນໄຫວຂອງຫ້ອງວ່າການ, ພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ, ເມືອງ, ເທດສະບານ, ນະຄອນ ທີ່ຂຶ້ນກັບຕົນ;
3. ສະເໜີຮ່າງແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຂອງແຂວງ, ນະຄອນຫຼວງ ຕໍ່ສະພາປະຊາຊົນຂັ້ນແຂວງ;
4. ສະເໜີສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງເອົາໂຄງປະກອບກົງຈັກຂອງອົງການປົກຄອງແຂວງ, ນະຄອນຫຼວງ; ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ, ຫົວໜ້າຫ້ອງວ່າການ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ;
5. ສະເໜີສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງເອົາ ການສ້າງຕັ້ງ, ຍຸບເລີກ, ແຍກອອກ, ໂຮມເຂົ້າ ພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ;
6. ສະເໜີສະພາປະຊາຊົນຂັ້ນແຂວງ ພິຈາລະນາການກຳນົດເຂດແດນຂອງແຂວງ, ນະຄອນຫຼວງ, ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ, ການກຳນົດເຂດແດນເມືອງ, ເທດສະບານ, ນະຄອນກ່ອນນຳສະເໜີຕໍ່ຂັ້ນເທິງອະນຸມັດ;
7. ສະເໜີຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງເອົາໂຄງປະກອບກົງຈັກຂອງອົງການປົກຄອງເມືອງ, ເທດສະບານ, ນະຄອນ;
8. ສະເໜີຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງເອົາການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ;
9. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພາຍຫຼັງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໄດ້ຮັບຮອງເອົາ;
10. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຮອງເຈົ້າເມືອງ, ຮອງຫົວໜ້າເທດສະບານ, ຮອງເຈົ້ານະຄອນຕາມການສະເໜີຂອງເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ;

11. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າຫ້ອງວ່າການ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ ພາຍຫຼັງສະພາປະຊາຊົນຂັ້ນແຂວງ ໄດ້ຮັບຮອງເອົາ;

12. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງຫົວໜ້າຫ້ອງວ່າການ, ຮອງຫົວໜ້າພະແນກ, ຮອງຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ ຕາມການສະເໜີຂອງຫົວໜ້າຫ້ອງວ່າການ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ; ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຜູ້ດຳລົງຕຳແໜ່ງບໍລິຫານອື່ນ;

13. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ; ສັ່ງໂຈະ ຫຼື ຍົກເລີກນິຕິກຳອື່ນ ຂອງທຸກຂະແໜງການຢູ່ໃນຂັ້ນຂອງຕົນ ຫຼື ຂັ້ນລຸ່ມ ທີ່ຂັດກັບກົດໝາຍ, ຍົກເວັ້ນຄຳຕົກລົງ ກ່ຽວກັບການດຳເນີນຄະດີຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນທ້ອງຖິ່ນ;

14. ສະເໜີຂັ້ນເທິງພິຈາລະນາໂຈະ ຫຼື ຍົກເລີກນິຕິກຳຂອງຂະແໜງການທີ່ຂັດກັບກົດໝາຍ;

15. ຕົກລົງສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ, ກຳນົດເຂດແດນບ້ານ ແລະ ປ່ຽນຊື່ບ້ານ ຕາມການສະເໜີຂອງເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ;

16. ສັ່ງຈ່າຍງົບປະມານຂອງ ແຂວງ, ນະຄອນຫຼວງ;

17. ເຂົ້າຮ່ວມກອງປະຊຸມເປີດກວ້າງຂອງລັດຖະບານ ຕາມການເຊີນ;

18. ຮັບຜິດຊອບຕໍ່ສະພາປະຊາຊົນຂັ້ນແຂວງ ແລະ ລັດຖະບານ ກ່ຽວກັບຜົນສຳເລັດ, ຄວາມບົກພ່ອງໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ;

19. ສະຫຼຸບ, ລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງຕົນ ລວມທັງສະພາບການຮອບດ້ານຂອງ ແຂວງ, ນະຄອນຫຼວງ ໃຫ້ລັດຖະບານ, ອົງການທີ່ກ່ຽວຂ້ອງ ແລະ ສະພາປະຊາຊົນຂັ້ນແຂວງ ຢ່າງເປັນປົກກະຕິ;

20. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 21 (ປັບປຸງ) ສິດ ແລະ ໜ້າທີ່ຂອງຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ**

ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ຊ່ວຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງໃນການຊີ້ນຳວຽກງານຂອງອົງການປົກຄອງແຂວງ, ນະຄອນຫຼວງ ແລະ ອົງການປົກຄອງຂັ້ນເມືອງ, ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

ໃນກໍລະນີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ບໍ່ສາມາດປະຕິບັດໜ້າທີ່ໄດ້ຍ້ອນເຫດຜົນໃດໜຶ່ງ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ຜູ້ໄດ້ຮັບມອບໝາຍເປັນຜູ້ຮັກສາການແທນ.

## ໝວດທີ 5
## ກອງປະຊຸມຂອງອົງການປົກຄອງແຂວງ, ນະຄອນຫຼວງ

**ມາດຕາ 22 (ປັບປຸງ) ກອງປະຊຸມ**

ກອງປະຊຸມຂອງອົງການປົກຄອງແຂວງ, ນະຄອນຫຼວງ ເປີດຂຶ້ນເດືອນລະເທື່ອ ໂດຍແມ່ນເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ຮຽກໂຮມ ແລະ ເປັນປະທານ. ຜູ້ເຂົ້າຮ່ວມກອງປະຊຸມຂອງອົງການປົກຄອງແຂວງ, ນະຄອນຫຼວງ ປະກອບດ້ວຍ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ, ຫົວໜ້າຫ້ອງວ່າການແຂວງ, ນະຄອນຫຼວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ. ນອກຈາກນີ້ຖ້າຫາກມີຄວາມຈຳເປັນອາດເຊີນເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແລະ ຜູ້ຕາງໜ້າຈາກພາກສ່ວນອື່ນທີ່ກ່ຽວຂ້ອງ ເຂົ້າຮ່ວມນຳກໍໄດ້.

ໃນກໍລະນີມີຄວາມຈຳເປັນ ແລະ ຮີບດ່ວນ ອາດເປີດກອງປະຊຸມວິສາມັນ ຕາມການຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

ໃນກອງປະຊຸມແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ຊຶ່ງເຊັນໂດຍຜູ້ບັນທຶກ ແລະ ເຊັນຢັ້ງຢືນໂດຍປະທານກອງປະຊຸມ ແລ້ວສົ່ງໃຫ້ຜູ້ເຂົ້າຮ່ວມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ. ໃນກໍລະນີມີການຕົກລົງບັນຫາສຳຄັນນັ້ນ ຕ້ອງເຮັດມະຕິຂອງກອງປະຊຸມ.

**ມາດຕາ 23 (ປັບປຸງ) ບັນຫາທີ່ຕ້ອງນຳເຂົ້າກອງປະຊຸມ**

ບັນຫາທີ່ຕ້ອງນຳເຂົ້າພິຈາລະນາ ແລະ ຕົກລົງໃນກອງປະຊຸມ ຂອງອົງການປົກຄອງແຂວງ, ນະຄອນຫຼວງ ມີ ດັ່ງນີ້:

1. ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ການດັດແກ້ແຜນງົບປະມານປະຈຳປີ ຂອງທ້ອງຖິ່ນ;
2. ການກຳນົດເຂດແດນ ແລະ ໂຄງປະກອບການຈັດຕັ້ງຂອງແຂວງ, ນະຄອນຫຼວງ; ການສ້າງຕັ້ງ, ຍຸບເລີກ,ໂຮມເຂົ້າ, ແຍກອອກ ແລະ ການກຳນົດເຂດແດນ ຂອງ ເມືອງ, ເທດສະບານ, ນະຄອນ;
3. ຮ່າງນິຕິກຳຕ່າງໆ;
4. ໂຄງການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ;
5. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວຽກງານການຕ່າງປະເທດ;
6. ວຽກງານ ນະໂຍບາຍ ແລະ ພະນັກງານ;
7. ບົດລາຍງານຮອບດ້ານຕໍ່ລັດຖະບານ ແລະ ສະພາປະຊາຊົນຂັ້ນແຂວງ;
8. ບັນຫາອື່ນ ທີ່ມີຄວາມສຳຄັນ ແລະ ຈຳເປັນ.

## ໝວດທີ 6
## ການພົວພັນວຽກງານຂອງອົງການປົກຄອງແຂວງ, ນະຄອນຫຼວງ

**ມາດຕາ 24 (ໃໝ່) ການພົວພັນກັບສະພາປະຊາຊົນຂັ້ນແຂວງ**

ອົງການປົກຄອງແຂວງ, ນະຄອນຫຼວງ ພົວພັນກັບສະພາປະຊາຊົນຂັ້ນແຂວງ ດ້ວຍການສົມທົບກັນຕາມກໍລະນີ ດັ່ງນີ້:

1. ການສ້າງ ແລະ ປັບປຸງນິຕິກຳຂັ້ນແຂວງ;
2. ການຄົ້ນຄວ້າບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ທີ່ຈະສະເໜີໃຫ້ສະພາປະຊາຊົນຂັ້ນແຂວງພິຈາລະນາ;
3. ການຄົ້ນຄວ້າບຸກຄະລາກອນ ທີ່ຈະສະເໜີໃຫ້ສະພາປະຊາຊົນຂັ້ນແຂວງເລືອກຕັ້ງ ຫຼື ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ;
4. ການຄົ້ນຄວ້າປະກອບຄຳເຫັນກ່ຽວກັບການແກ້ໄຂຄຳຮ້ອງທຸກຂອງປະຊາຊົນ;
5. ການເຂົ້າຮ່ວມ ແລະ ໃຫ້ການຊີ້ແຈງຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ;
6. ການລາຍງານ, ອະທິບາຍ ແລະ ແກ້ຂໍ້ຂ້ອງໃຈ, ຕອບການຊັກຖາມຂອງສະມາຊິກສະພາປະຊາຊົນຂັ້ນແຂວງ;
7. ການສະໜອງຂໍ້ມູນຕ່າງໆ ຕາມຄຳສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
8. ບັນຫາສຳຄັນອື່ນ ທີ່ຈຳເປັນຕ້ອງສົມທົບກັນ.

**ມາດຕາ 25 (ໃໝ່) ການພົວພັນກັບ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນ**

ອົງການປົກຄອງແຂວງ, ນະຄອນຫຼວງ ສົມທົບກັບສານປະຊາຊົນ ແລະ ອົງການໄອຍະການປະຊາຊົນທ້ອງຖິ່ນ ໃນການຕິດຕາມ, ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ໃນການສະກັດກັ້ນສິ່ງຫຍໍ້ທໍ້ໃນສັງຄົມ.

ໃນກໍລະນີຈໍາເປັນ ອົງການປົກຄອງແຂວງ, ນະຄອນຫຼວງ ອາດເຊີນຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ທ້ອງຖິ່ນ ເຂົ້າຮ່ວມກອງປະຊຸມຂອງຕົນກໍໄດ້.

**ມາດຕາ 26 (ໃໝ່) ການພົວພັນກັບແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ທ້ອງຖິ່ນ**

ອົງການປົກຄອງແຂວງ, ນະຄອນຫຼວງ ປະສານສົມທົບກັບແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ທ້ອງຖິ່ນ ເພື່ອປຶກສາຫາລື, ແລກປ່ຽນຄວາມຄິດເຫັນ, ປຸກລະດົມຊຸກຍູ້ໃຫ້ອົງການຈັດຕັ້ງດັ່ງກ່າວ ເຂົ້າຮ່ວມໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ຮັບປະກັນໃຫ້ການເຄື່ອນໄຫວວຽກງານມີປະສິດທິຜົນ. ໃນກໍລະນີຈໍາເປັນ ອາດເຊີນຜູ້ຕາງໜ້າຂອງອົງການດັ່ງກ່າວເຂົ້າຮ່ວມກອງປະຊຸມຂອງຕົນກໍໄດ້.

## ພາກທີ IV
## ເມືອງ ແລະ ອົງການປົກຄອງເມືອງ
### ໝວດທີ 1
### ການສ້າງຕັ້ງເມືອງ

**ມາດຕາ 27 (ປັບປຸງ) ເມືອງ**

ເມືອງ ແມ່ນ ເຂດການປົກຄອງທ້ອງຖິ່ນ, ກວມເອົາທັງພື້ນທີ່ຕົວເມືອງ ແລະ ຊົນນະບົດ ຊຶ່ງປະກອບດ້ວຍຫຼາຍບ້ານ.

**ມາດຕາ 28 (ປັບປຸງ) ການສ້າງຕັ້ງເມືອງ**

ເມືອງ ຖືກສ້າງຕັ້ງ, ຍຸບເລີກ, ແຍກອອກ, ໂຮມເຂົ້າ ແລະ ກໍານົດເຂດແດນ ໂດຍການຕົກລົງຂອງລັດຖະບານ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພາຍຫຼັງສະພາປະຊາຊົນທ້ອງຖິ່ນໄດ້ຮັບຮອງເອົາ.

ຂັ້ນຕອນ ແລະ ວິທີການຄົ້ນຄວ້າ ເພື່ອສ້າງຕັ້ງເມືອງ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 29 (ປັບປຸງ) ເງື່ອນໄຂການສ້າງຕັ້ງເມືອງ**

ໃນການສ້າງຕັ້ງເມືອງ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີທີ່ຕັ້ງທາງດ້ານພູມສາດທີ່ເໝາະສົມແກ່ການປົກຄອງ;
2. ມີພົນລະເມືອງຢ່າງໜ້ອຍ ສາມສິບພັນຄົນ ດໍາລົງຊີວິດຢູ່ ສໍາລັບເມືອງຢູ່ເຂດທົ່ງພຽງ ແລະ ຊາວພັນຄົນ ສໍາລັບເມືອງຢູ່ເຂດພູດອຍ ເວັ້ນເສຍແຕ່ລັດຖະບານໄດ້ຕົກລົງໄວ້ຕ່າງຫາກ;
3. ມີພື້ນຖານໂຄງລ່າງ ແລະ ມີປັດໄຈພື້ນຖານໃນການພັດທະນາເສດຖະກິດ-ສັງຄົມ.

## ໝວດທີ2
## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການປົກຄອງເມືອງ

**ມາດຕາ 30 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ**

ອົງການປົກຄອງເມືອງ ແມ່ນ ອົງການບໍລິຫານລັດຂັ້ນເມືອງ ຊຶ່ງມີພາລະບົດບາດຄຸ້ມຄອງບໍລິຫານລັດທາງດ້ານການເມືອງ, ການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ສ້າງ ແລະ ນຳໃຊ້ຊັບພະຍາກອນມະນຸດ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນ ໃນທ້ອງຖິ່ນຕົນ; ຊີ້ນຳ, ກວດກາ ການຈັດຕັ້ງປະຕິບັດແຜນພັດທະນາບ້ານໃນຂອບເຂດການຄຸ້ມຄອງຂອງຕົນ.

**ມາດຕາ 31 (ໃໝ່) ສິດ ແລະ ໜ້າທີ່**

ອົງການປົກຄອງເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບປະກັນການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ດຳລັດ, ລະບຽບການ, ມະຕິ, ຄຳສັ່ງ, ຄຳແນະນຳຂອງຂັ້ນເທິງ;
2. ສ້າງ ແລະ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ; ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຕ້ານ ແລະ ສະກັດກັ້ນການສໍ້ລາດບັງຫຼວງ ແລະ ປາກົດການຫຍໍ້ທໍ້ໃນສັງຄົມ;
3. ຊີ້ນຳ, ຊຸກຍູ້, ປຸກລະດົມ ວຽກງານເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນທ້ອງຖິ່ນ;
4. ຈັດຕັ້ງ,ອຳນວຍ, ຄວບຄຸມ ແລະ ຕິດຕາມກວດກາການເຄື່ອນໄຫວປະຕິບັດໜ້າທີ່ ຂອງຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ ແລະ ຂອງອົງການປົກຄອງບ້ານ;
5. ສ້າງຕັ້ງ ແລະ ຄຸ້ມຄອງໜ່ວຍງານບໍລິການຂອງລັດ, ຈັດຕັ້ງຄຸ້ມຄອງບໍລິຫານຕົວເມືອງ ແລະ ພື້ນທີ່ ທີ່ມີລັກສະນະເປັນຕົວເມືອງໃຫ້ມີການພັດທະນາດ້ານພື້ນຖານໂຄງລ່າງ, ການບໍລິການສາທາລະນະທີ່ຈຳເປັນ, ມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສະອາດ ແລະ ສວຍງາມ;
6. ໂຄສະນາ ເຜີຍແຜ່ ແລະ ໃຫ້ຄວາມຮູ້ກ່ຽວກັບວຽກງານສຸຂະນາໄມແກ່ປະຊາຊົນ, ສົ່ງເສີມດ້ານສາທາລະນະສຸກ, ພັດທະນາການສຶກສາ, ກິລາ-ກາຍຍະກຳ ແລະ ສິດສະເໝີພາບ ລະຫວ່າງຍິງ-ຊາຍ;
7. ປົກປັກຮັກສາ, ສົ່ງເສີມວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ທ້ອງຖິ່ນ ແລະ ຂອງເຜົ່າ; ສົ່ງເສີມການພັດທະນາສີມືແຮງງານ ແລະ ຄຸ້ມຄອງແຮງງານຕາມພາລະບົດບາດ ແລະ ຕາມການແບ່ງຂັ້ນຄຸ້ມຄອງ;
8. ອຳນວຍຄວາມສະດວກ ແລະ ຕິດຕາມການຈັດຕັ້ງປະຕິບັດໂຄງການລົງທຶນທີ່ສູນກາງ ແລະ ແຂວງ, ນະຄອນຫຼວງ ຄຸ້ມຄອງ; ສົ່ງເສີມການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມການແບ່ງຂັ້ນຄຸ້ມຄອງ;
9. ເສີມຂະຫຍາຍຄວາມສາມັກຄີ ຂອງປະຊາຊົນລາວບັນດາເຜົ່າ ແລະ ທຸກຊັ້ນຄົນໃນສັງຄົມ; ຄຸ້ມຄອງພົນລະເມືອງ, ຄົນຕ່າງດ້າວ, ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ, ວຽກງານເຜົ່າ ແລະ ສາສະໜາ, ປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ;
10. ພິຈາລະນາ, ໃຫ້ຄຳແນະນຳ ແລະ ແກ້ໄຂຄຳສະເໜີ ຂອງການຈັດຕັ້ງ ຫຼື ບຸກຄົນ ກ່ຽວກັບການກະທຳຂອງພະນັກງານ-ລັດຖະກອນ ແລະ ອົງການບໍລິຫານລັດ ໃນທ້ອງຖິ່ນຂອງຕົນ;

11. ຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ ແລະ ພັດທະນາຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອສ້າງແຫຼ່ງລາຍຮັບ, ຈັດເກັບລາຍຮັບໃຫ້ຖືກຕ້ອງ; ຄຸ້ມຄອງຫົວໜ່ວຍທຸລະກິດ, ອຸດສາຫະກຳ, ການຄ້າ, ການບໍລິການ ແລະ ອື່ນໆ;

12. ຄຸ້ມຄອງ ແລະ ປະຕິບັດແຜນລາຍຮັບ, ແຜນລາຍຈ່າຍຂອງທ້ອງຖິ່ນ; ອຳນວຍ, ຄວບຄຸມ ໃຫ້ອົງການທີ່ກ່ຽວຂ້ອງປະຕິບັດການສ້າງລາຍຮັບໃຫ້ຖືກຕ້ອງ, ຄົບຖ້ວນ, ທັນເວລາ ແລະ ໂປ່ງໃສ;

13. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ; ສັ່ງໂຈະ ຫຼື ຍົກເລີກນິຕິກຳອື່ນ ຂອງທຸກ ຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ ແລະ ຂັ້ນລຸ່ມ ທີ່ຂັດກັບກົດໝາຍ ຍົກເວັ້ນຄຳຕົກລົງ ກ່ຽວກັບ ການດຳເນີນຄະດີຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນທ້ອງຖິ່ນ; ສະເໜີຂັ້ນເທິງພິຈາລະນາໂຈະ ຫຼື ຍົກເລີກນິຕິກຳ ຂອງຂະແໜງການທີ່ຂັດກັບກົດໝາຍ;

14. ຄົ້ນຄວ້າໂຄງປະກອບການຈັດຕັ້ງ ແລະ ການກຳນົດເຂດແດນຂອງເມືອງ; ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ, ກຳນົດເຂດແດນຂອງບ້ານ ແລະ ການປ່ຽນຊື່ບ້ານ;

15. ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການ ຈັດຕັ້ງສັງຄົມ, ທຸກພາກສ່ວນເສດຖະກິດ ແລະ ປະຊາຊົນລາວບັນດາເຜົ່າ ເຂົ້າຮ່ວມການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຕ້ານປາກົດການຫຍໍ້ທໍ້ຢູ່ໃນເມືອງຂອງຕົນ;

16. ຄຸ້ມຄອງການຈັດຕັ້ງ, ພະນັກງານ-ລັດຖະກອນ; ຕິດຕາມກວດກາການປະຕິບັດໜ້າທີ່ຂອງພະ ນັກງານ-ລັດຖະກອນ ຂອງຫ້ອງການສາຍຕັ້ງຂັ້ນແຂວງ ແລະ ອົງການທີ່ກ່ຽວຂ້ອງ;

17. ສ້າງ, ບຳລຸງ ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານການເມືອງ, ການປົກຄອງ, ວິຊາສະເພາະ ໃຫ້ພະນັກງານ-ລັດຖະກອນຂອງຕົນ ແລະ ພະນັກງານຂອງບ້ານ;

18. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນ ລວມທັງສະພາບການຮອບດ້ານຂອງ ເມືອງ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ອົງການທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

19. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງຂອງອົງການປົກຄອງເມືອງ

### ມາດຕາ 32 (ປັບປຸງ) ໂຄງປະກອບກົງຈັກ

ອົງການປົກຄອງເມືອງ ມີ ໂຄງປະກອບກົງຈັກ ດັ່ງນີ້:

1. ຫ້ອງວ່າການເມືອງ;
2. ຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ ຊຶ່ງສ້າງຕັ້ງຂຶ້ນຕາມຄວາມຮຽກຮ້ອງ ຕ້ອງການຕົວຈິງຂອງວຽກງານ ໂດຍການຮັບຮອງຂອງສະພາປະຊາຊົນທ້ອງຖິ່ນ.

### ມາດຕາ 33 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດຂອງຫ້ອງວ່າການເມືອງ

ຫ້ອງວ່າການເມືອງ ແມ່ນ ໂຄງປະກອບກົງຈັກໜຶ່ງ ຂອງອົງການປົກຄອງເມືອງ ຊຶ່ງມີພາລະບົດບາດເປັນ ເສນາທິການ ໃຫ້ເຈົ້າເມືອງ ໃນການອຳນວຍຄວບຄຸມ, ຊຸກຍູ້, ຕິດຕາມການບໍລິຫານວຽກງານຂອງເມືອງ, ສ້າງແຜນການ, ໂຄງການດຳເນີນງານ, ຄົ້ນຄວ້າສັງລວມ, ຄຸ້ມຄອງເອກະສານ, ເປັນໃຈກາງພົວພັນປະສານງານ, ບໍລິຫານຮັບໃຊ້ການເຄື່ອນໄຫວວຽກງານໃຫ້ແກ່ການນຳຂອງເມືອງ ແລະ ການຄຸ້ມຄອງບໍລິຫານວຽກງານພາຍໃນ ຂອງຕົນ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການເມືອງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 34 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດຂອງຫ້ອງການ , ອົງການລັດທຽບເທົ່າຫ້ອງການຂອງເມືອງ**

ຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ ແມ່ນ ໂຄງປະກອບກົງຈັກໜຶ່ງ ຂອງອົງການປົກຄອງເມືອງ ຊຶ່ງມີພາລະບົດບາດເປັນເສນາທິການໃຫ້ອົງການປົກຄອງເມືອງ, ພະແນກຂັ້ນແຂວງ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ທາງດ້ານວິຊາການ ແລະ ຄຸ້ມຄອງບໍລິຫານລັດ ຕາມການແບ່ງຂັ້ນຄຸ້ມຄອງ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 35 (ປັບປຸງ) ໂຄງປະກອບບຸກຄະລາກອນ**

ອົງການປົກຄອງເມືອງ ປະກອບດ້ວຍບຸກຄະລາກອນ ດັ່ງນີ້:

1. ເຈົ້າເມືອງ, ຮອງເຈົ້າເມືອງ;
2. ຫົວໜ້າຫ້ອງວ່າການ, ຫົວໜ້າຫ້ອງການ ແລະ ຫົວໜ້າອົງການລັດທຽບເທົ່າຫ້ອງການຂອງເມືອງ.

**ມາດຕາ 36 (ປັບປຸງ) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງເຈົ້າເມືອງ**

ເຈົ້າເມືອງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພາຍຫຼັງສະພາປະຊາຊົນທ້ອງຖິ່ນ ໄດ້ຮັບຮອງເອົາ.

**ມາດຕາ 37 (ປັບປຸງ) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງຮອງເຈົ້າເມືອງ**

ຮອງເຈົ້າເມືອງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງເຈົ້າເມືອງ.

**ມາດຕາ 38 (ປັບປຸງ) ອາຍຸການຂອງເຈົ້າເມືອງ**

ເຈົ້າເມືອງ ມີອາຍຸການສະໄໝລະ ຫ້າປີ ແລະ ສາມາດດໍາລົງຕໍາແໜ່ງຢູ່ບ່ອນເກົ່າໄດ້ບໍ່ເກີນສອງສະໄໝຕິດຕໍ່ກັນ.

ໃນກໍລະນີເຈົ້າເມືອງ ຫາກໝົດອາຍຸການແລ້ວ ແຕ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຍັງບໍ່ທັນໄດ້ແຕ່ງຕັ້ງເຈົ້າເມືອງຜູ້ໃໝ່ນັ້ນ ໃຫ້ເຈົ້າເມືອງຜູ້ເກົ່າສືບຕໍ່ປະຕິບັດໜ້າທີ່ຈົນກວ່າຈະມີການແຕ່ງຕັ້ງຜູ້ໃໝ່.

ການແຕ່ງຕັ້ງເຈົ້າເມືອງຜູ້ໃໝ່ ຕ້ອງດໍາເນີນພາຍໃນ ເກົ້າສິບວັນ ຫຼັງຈາກອາຍຸການຂອງເຈົ້າເມືອງຜູ້ເກົ່າສິ້ນສຸດລົງ.

## ໝວດທີ 4
## ພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າເມືອງ

**ມາດຕາ 39 (ປັບປຸງ) ພາລະບົດບາດ**

ເຈົ້າເມືອງ ເປັນຫົວໜ້າອົງການປົກຄອງເມືອງ, ເປັນຕົວແທນ ແລະ ຮັບຜິດຊອບຕໍ່ອົງການປົກຄອງແຂວງ, ນະຄອນຫຼວງ, ຊີ້ນໍາອົງການປົກຄອງເມືອງ ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 30 ແລະ 31 ຂອງກົດໝາຍສະບັບນີ້.

ມາດຕາ 40 (ປັບປຸງ) ສິດ ແລະ ໜ້າທີ່

ເຈົ້າເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮຽກໂຮມ ແລະ ເປັນປະທານກອງປະຊຸມອົງການປົກຄອງເມືອງ;

2. ຊີ້ນຳ, ອຳນວຍຄວບຄຸມວຽກງານຂອງອົງການປົກຄອງເມືອງ; ກວດກາການປະຕິບັດມະຕິຂອງກອງປະຊຸມສະພາປະຊາຊົນທ້ອງຖິ່ນ, ມະຕິຂອງກອງປະຊຸມອົງການປົກຄອງເມືອງ ແລະ ການເຄື່ອນໄຫວຂອງຫ້ອງວ່າການ, ຫ້ອງການຂອງເມືອງ, ອົງການລັດທຽບເທົ່າຫ້ອງການຂອງເມືອງ ທີ່ຂຶ້ນກັບຕົນ;

3. ຮັບຮອງເອົາຜົນການເລືອກຕັ້ງ, ແຕ່ງຕັ້ງ ຫຼື ປົດຕຳແໜ່ງນາຍບ້ານ, ຮອງນາຍບ້ານ ແລະ ຮັບຮອງກົດລະບຽບບ້ານ;

4. ສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບໂຄງປະກອບການຈັດຕັ້ງ ແລະ ເຂດແດນຂອງເມືອງ; ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ, ການກຳນົດເຂດແດນຂອງບ້ານ ແລະ ການປ່ຽນຊື່ບ້ານ;

5. ສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຮອງເຈົ້າເມືອງ ຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

6. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າຫ້ອງວ່າການເມືອງ, ຫົວໜ້າຫ້ອງການ, ຫົວໜ້າອົງການລັດທຽບເທົ່າຫ້ອງການ ແລະ ຜູ້ດຳລົງຕຳແໜ່ງບໍລິຫານອື່ນຂອງເມືອງ;

7. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ; ສັ່ງໂຈະ ຫຼື ຍົກເລີກນິຕິກຳອື່ນ ຂອງທຸກຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ ແລະ ຂັ້ນລຸ່ມ ທີ່ຂັດກັບກົດໝາຍ ຍົກເວັ້ນຄຳຕົກລົງ ກ່ຽວກັບການດຳເນີນຄະດີຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນ;

8. ສະເໜີຂັ້ນເທິງພິຈາລະນາໂຈະ ຫຼື ຍົກເລີກນິຕິກຳ ຂອງຂະແໜງການທີ່ຂັດກັບກົດໝາຍ;

9. ສັ່ງຈ່າຍງົບປະມານຂອງເມືອງ;

10. ເຂົ້າຮ່ວມກອງປະຊຸມ ຂອງອົງການປົກຄອງແຂວງ, ນະຄອນຫຼວງ ຕາມການເຊີນ;

11. ຮັບຜິດຊອບຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບຜົນສຳເລັດ ແລະ ຄວາມບົກພ່ອງໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ;

12. ສະຫຼຸບ, ລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງຕົນ ລວມທັງສະພາບການເຄື່ອນໄຫວວຽກງານຮອບດ້ານຂອງເມືອງ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ອົງການທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 41 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຮອງເຈົ້າເມືອງ

ຮອງເຈົ້າເມືອງ ຊ່ວຍວຽກເຈົ້າເມືອງ ໃນການຊີ້ນຳວຽກງານຂອງອົງການປົກຄອງເມືອງ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງເຈົ້າເມືອງ.

ໃນກໍລະນີເຈົ້າເມືອງບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດຜົນໃດໜຶ່ງ ຮອງເຈົ້າເມືອງຜູ້ໄດ້ຮັບມອບໝາຍເປັນຜູ້ຮັກສາການແທນ.

## ໝວດທີ 5
## ກອງປະຊຸມຂອງອົງການປົກຄອງເມືອງ

ມາດຕາ 42 (ປັບປຸງ) ກອງປະຊຸມ

ກອງປະຊຸມຂອງອົງການປົກຄອງເມືອງ ເປີດຂຶ້ນເດືອນລະເທື່ອ ໂດຍແມ່ນເຈົ້າເມືອງເປັນຜູ້ຮຽກໂຮມ ແລະ ເປັນປະທານ. ຜູ້ເຂົ້າຮ່ວມກອງປະຊຸມຂອງອົງການປົກຄອງເມືອງ ປະກອບດ້ວຍຮອງເຈົ້າເມືອງ, ຫົວໜ້າຫ້ອງ

ອໍານາດ, ຫົວໜ້າຫ້ອງການ, ຫົວໜ້າອົງການລັດທຽບເທົ່າຫ້ອງການຂອງເມືອງ. ນອກຈາກນີ້ ຖ້າຫາກມີຄວາມຈໍາເປັນ ອາດເຊີນຜູ້ຕາງໜ້າຈາກພາກສ່ວນອື່ນເຂົ້າຮ່ວມນໍາກໍໄດ້.

ໃນກໍລະນີມີຄວາມຈໍາເປັນ ແລະ ຮີບດ່ວນ ອາດເປີດກອງປະຊຸມວິສາມັນ ຕາມການຕົກລົງຂອງເຈົ້າເມືອງ.

ໃນກອງປະຊຸມແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ຊຶ່ງເຊັນໂດຍຜູ້ບັນທຶກ ແລະ ເຊັນຢັ້ງຢືນໂດຍປະທານກອງປະຊຸມ ແລ້ວສົ່ງໃຫ້ຜູ້ເຂົ້າຮ່ວມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ. ໃນກໍລະນີມີການຕົກລົງບັນຫາສໍາຄັນນັ້ນ ຕ້ອງເຮັດເປັນມະຕິຂອງກອງປະຊຸມ.

### ມາດຕາ 43 (ປັບປຸງ) ບັນຫາທີ່ຕ້ອງນໍາເຂົ້າກອງປະຊຸມ

ບັນຫາທີ່ຕ້ອງນໍາເຂົ້າພິຈາລະນາ ແລະ ຕົກລົງໃນກອງປະຊຸມຂອງອົງການປົກຄອງເມືອງ ມີ ດັ່ງນີ້:

1. ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ການດັດແກ້ແຜນງົບປະມານປະຈໍາປີ ຂອງເມືອງ;
2. ການກໍານົດເຂດແດນ ແລະ ໂຄງປະກອບການຈັດຕັ້ງ ຂອງເມືອງ; ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ, ການກໍານົດເຂດແດນຂອງບ້ານ ແລະ ການປ່ຽນຊື່ບ້ານ;
3. ຮ່າງນິຕິກໍາຕ່າງໆ;
4. ໂຄງການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ;
5. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
6. ວຽກງານນະໂຍບາຍ ແລະ ພະນັກງານ;
7. ບົດລາຍງານຮອບດ້ານ ຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
8. ບັນຫາອື່ນ ທີ່ມີຄວາມສໍາຄັນ ແລະ ຈໍາເປັນ.

## ພາກທີ V
## ເທດສະບານ ແລະ ອົງການປົກຄອງເທດສະບານ
### ໝວດທີ 1
### ການສ້າງຕັ້ງເທດສະບານ

### ມາດຕາ 44 (ປັບປຸງ) ເທດສະບານ

ເທດສະບານ ແມ່ນ ເຂດການປົກຄອງຂັ້ນເມືອງ ກວມເອົາທັງພື້ນທີ່ ຕົວເມືອງ, ຊົນນະບົດ ແລະ ປະກອບດ້ວຍຫຼາຍບ້ານ.

### ມາດຕາ 45 (ປັບປຸງ )ການສ້າງຕັ້ງເທດສະບານ

ເທດສະບານ ຖືກສ້າງຕັ້ງ, ຍຸບເລີກ, ແຍກອອກ, ໂຮມເຂົ້າ ແລະ ກໍານົດເຂດແດນ ໂດຍການຕົກລົງຂອງລັດຖະບານ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພາຍຫຼັງສະພາປະຊາຊົນທ້ອງຖິ່ນໄດ້ຮັບຮອງເອົາ.

ຂັ້ນຕອນ ແລະ ວິທີການຄົ້ນຄວ້າ ເພື່ອສ້າງຕັ້ງເທດສະບານ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 46 (ປັບປຸງ) ເງື່ອນໄຂການສ້າງຕັ້ງເທດສະບານ**

ເມືອງທີ່ເປັນທີ່ຕັ້ງຂອງອົງການປົກຄອງຂັ້ນແຂວງ ສ້າງຕັ້ງເປັນເທດສະບານ.

ສໍາລັບເມືອງອື່ນຈະສ້າງຕັ້ງເປັນເທດສະບານໄດ້ ກໍຕໍ່ເມື່ອມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີພົນລະເມືອງແຕ່ ສີ່ສິບພັນຄົນ ຂຶ້ນໄປ ແລະ ຢູ່ພາຍໃນພື້ນທີ່ຕົວເມືອງນັ້ນ ຕ້ອງມີ ສິບພັນຄົນ ຂຶ້ນໄປ;
2. ມີຄວາມໜາແໜ້ນຂອງພົນລະເມືອງຢູ່ພາຍໃນພື້ນທີ່ຕົວເມືອງນັ້ນ ແຕ່ ສີ່ຮ້ອຍຫ້າສິບຄົນ ຂຶ້ນໄປ ຕໍ່ກິໂລຕາແມັດ;
3. ມີຈໍານວນຜູ້ປະກອບອາຊີບເປັນກະສິກອນຢູ່ພາຍໃນຕົວເມືອງບໍ່ເກີນ ສາມສິບສ່ວນຮ້ອຍ;
4. ມີພື້ນຖານໂຄງລ່າງດ້ານເສດຖະກິດ, ວັດທະນະທໍາ-ສັງຄົມ ໄດ້ຮັບການພັດທະນາເປັນລະບົບ;
5. ກຸ້ມຕົນເອງດ້ານລາຍຈ່າຍບໍລິຫານປົກກະຕິ.

## ໝວດທີ 2
## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການປົກຄອງເທດສະບານ

**ມາດຕາ 47 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ**

ອົງການປົກຄອງເທດສະບານ ແມ່ນ ອົງການບໍລິຫານລັດຂັ້ນເມືອງ ຊຶ່ງມີພາລະບົດບາດຄຸ້ມຄອງບໍລິຫານລັດທາງດ້ານການເມືອງ, ການປົກຄອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ສ້າງ ແລະ ນໍາໃຊ້ຊັບພະຍາກອນມະນຸດ, ປົກປັກຮັກສາ ແລະ ນໍາໃຊ້ຊັບພະຍາກອນທໍາມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນ ໃນທ້ອງຖິ່ນຕົນ; ຊີ້ນໍາກວດກາການຈັດຕັ້ງປະຕິບັດແຜນພັດທະນາບ້ານ, ຈັດຕັ້ງ ການບໍລິການສາທາລະນະ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສະອາດ ແລະ ສວຍງາມໃນຕົວເທດສະບານ.

**ມາດຕາ 48 (ໃໝ່) ສິດ ແລະ ໜ້າທີ່**

ອົງການປົກຄອງເທດສະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບປະກັນການຈັດຕັ້ງປະຕິບັດ ລັດຖະທໍາມະນູນ, ກົດໝາຍ, ດໍາລັດ, ລະບຽບການ, ມະຕິ, ຄໍາສັ່ງ, ຄໍາແນະນໍາ ຂອງຂັ້ນເທິງ;
2. ສ້າງ ແລະ ພັດທະນາເທດສະບານ ໃຫ້ສາມາດກຸ້ມຕົນເອງໄດ້ທາງດ້ານເສດຖະກິດ;
3. ສ້າງ ແລະ ຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ; ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຕ້ານ ແລະ ສະກັດກັ້ນການສໍ້ລາດບັງຫຼວງ ແລະ ປາກົດການຫຍໍ້ທໍ້ໃນສັງຄົມ;
4. ຊີ້ນໍາ, ຊຸກຍູ້, ປຸກລະດົມ ວຽກງານເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນທ້ອງຖິ່ນ;
5. ຈັດຕັ້ງ, ອໍານວຍ, ຄວບຄຸມ ແລະ ຕິດຕາມກວດກາການເຄື່ອນໄຫວປະຕິບັດໜ້າທີ່ຂອງຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເທດສະບານ ແລະ ຂອງອົງການປົກຄອງບ້ານ;
6. ສ້າງຕັ້ງ ແລະ ຄຸ້ມຄອງໜ່ວຍງານບໍລິການຂອງລັດ, ຈັດຕັ້ງຄຸ້ມຄອງບໍລິຫານຕົວເທດສະບານ ໃຫ້ມີການພັດທະນາພື້ນຖານໂຄງລ່າງ, ການບໍລິການສາທາລະນະທີ່ຈໍາເປັນ, ມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສະອາດ ແລະ ສວຍງາມ;

7. ໂຄສະນາ ເຜີຍແຜ່ ແລະ ໃຫ້ຄວາມຮູ້ກ່ຽວກັບວຽກງານສຸຂານາໄມແກ່ປະຊາຊົນ, ສົ່ງເສີມດ້ານສາທາລະນະສຸກ, ພັດທະນາການສຶກສາ, ກິລາ-ກາຍຍະກຳ ແລະ ສິດສະເໝີພາບລະຫວ່າງຍິງ-ຊາຍ;

8. ປົກປັກຮັກສາ, ສົ່ງເສີມວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ທ້ອງຖິ່ນ ແລະ ຂອງເຜົ່າ; ສົ່ງເສີມການພັດທະນາສີມືແຮງງານ ແລະ ຄຸ້ມຄອງແຮງງານ ຕາມພາລະບົດບາດ ແລະ ຕາມການແບ່ງຂັ້ນຄຸ້ມຄອງ;

9. ອຳນວຍຄວາມສະດວກ ແລະ ຕິດຕາມການຈັດຕັ້ງປະຕິບັດໂຄງການລົງທຶນທີ່ສູນກາງ ແລະ ແຂວງ, ນະຄອນຫຼວງ ຄຸ້ມຄອງ; ສົ່ງເສີມການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດຢູ່ໃນເທດສະບານຂອງຕົນຕາມການແບ່ງຂັ້ນຄຸ້ມຄອງ;

10. ເສີມຂະຫຍາຍຄວາມສາມັກຄີ ຂອງປະຊາຊົນລາວບັນດາເຜົ່າ ແລະ ທຸກຊັ້ນຄົນໃນສັງຄົມ; ຄຸ້ມຄອງພົນລະເມືອງ, ຄົນຕ່າງດ້າວ, ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ, ວຽກງານເຜົ່າ ແລະ ສາສະໜາ, ປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ;

11. ພິຈາລະນາ, ໃຫ້ຄຳແນະນຳ ແລະ ແກ້ໄຂຄຳສະເໜີ ຂອງການຈັດຕັ້ງ ຫຼື ບຸກຄົນ ກ່ຽວກັບການກະທຳຂອງພະນັກງານ-ລັດຖະກອນ ແລະ ອົງການບໍລິຫານລັດໃນທ້ອງຖິ່ນຂອງຕົນ;

12. ຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ ແລະ ພັດທະນາຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ຕາມການແບ່ງ ຂັ້ນຄຸ້ມຄອງ ເພື່ອສ້າງແຫຼ່ງລາຍຮັບ, ຈັດເກັບລາຍຮັບໃຫ້ຖືກຕ້ອງ, ຄຸ້ມຄອງຫົວໜ່ວຍທຸລະກິດ, ອຸດສາຫະກຳ, ການຄ້າ, ການບໍລິການ ແລະ ອື່ນໆ;

13. ຄຸ້ມຄອງ ແລະ ປະຕິບັດແຜນລາຍຮັບ, ແຜນລາຍຈ່າຍຂອງເທດສະບານ; ອຳນວຍ, ຄວບຄຸມໃຫ້ອົງການທີ່ກ່ຽວຂ້ອງປະຕິບັດການສ້າງລາຍຮັບໃຫ້ຖືກຕ້ອງ, ຄົບຖ້ວນ, ທັນເວລາ ແລະ ໂປ່ງໃສ;

14. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ; ສັ່ງໂຈະ ຫຼື ຍົກເລີກນິຕິກຳອື່ນ ຂອງທຸກຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເທດສະບານ ແລະ ຂັ້ນລຸ່ມ ທີ່ຂັດກັບກົດໝາຍ ຍົກເວັ້ນຄຳຕົກລົງກ່ຽວກັບການດຳເນີນຄະດີຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນທ້ອງຖິ່ນ; ສະເໜີຂັ້ນເທິງພິຈາລະນາໂຈະ ຫຼື ຍົກເລີກນິຕິກຳຂອງຂະແໜງການທີ່ຂັດກັບກົດໝາຍ;

15. ຄົ້ນຄວ້າໂຄງປະກອບການຈັດຕັ້ງ ແລະ ການກຳນົດເຂດແດນຂອງເທດສະບານ; ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ, ກຳນົດເຂດແດນຂອງບ້ານ ແລະ ການປ່ຽນຊື່ບ້ານ;

16. ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ທຸກພາກສ່ວນເສດຖະກິດ ແລະ ປະຊາຊົນລາວບັນດາເຜົ່າ ເຂົ້າຮ່ວມການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຕ້ານປາກົດການຫຍໍ້ທໍ້ ຢູ່ໃນເທດສະບານຂອງຕົນ;

17. ສ້າງຜັງເມືອງ, ຄຸ້ມຄອງການກໍ່ສ້າງ ແລະ ການພັດທະນາໃນພື້ນທີ່ຕົວເທດສະບານ, ປັບປຸງບູລະນະໂຄງລ່າງ, ຄຸ້ມຄອງວັດທະນະທຳ-ສັງຄົມ, ກິລາ-ກາຍຍະກຳ ແລະ ການບໍລິການຂອງຕົວເທດສະບານ; ຄຸ້ມຄອງ, ກວດກາສາທາລະນະປະໂຫຍດ ຖະໜົນຫົນທາງ, ໄຟຟ້າ, ນ້ຳປະປາ, ຮ່ອງລະບາຍນ້ຳ, ລະບົບບຳບັດນ້ຳເສຍ, ປ້ອງກັນຕາຝັ່ງເຈື່ອນ, ໂຮງຮຽນ, ໂຮງໝໍ, ຕະຫຼາດ, ຮ້ານກິນດື່ມ, ສະຖານບັນເທີງ, ລະບົບແສງສະຫວ່າງ, ສວນສາທາລະນະ, ປ້ອງກັນ ແລະ ແກ້ໄຂສາທາລະນະໄພ, ອະນາໄມ, ເກັບມ້ຽນ, ກຳຈັດຂີ້ເຫຍື້ອ ແລະ ອື່ນໆ;

18. ສ້າງຕັ້ງ ແລະ ຄຸ້ມຄອງການບໍລິການສາທາລະນະທີ່ຈຳເປັນ ເປັນຕົ້ນ ການຂົນສົ່ງມວນຊົນ, ວິສະວະກຳການຈໍລະຈອນໃນທ້ອງຖະໜົນ, ການຄຸ້ມຄອງຈັດສັນຄິວລົດ, ບ່ອນຈອດລົດໃນສະຖານທີ່ສາທາລະນະ ແລະ ອື່ນໆ;

19. ຄຸ້ມຄອງ, ກວດກາກິດຈະການກໍ່ສ້າງ ໃຫ້ໄດ້ມາດຕະຖານ, ມີຄວາມປອດໄພ ແລະ ທົນທານ;

20. ປົກປັກຮັກສາ ແລະ ປັບປຸງສິ່ງແວດລ້ອມ ເປັນຕົ້ນ ເຂດສະຫງວນ, ໜອງ, ບຶງ, ເຂດແຄມແມ່ນໍ້າ, ທິວທັດທຳມະຊາດ, ປ່າສະຫງວນ ແລະ ອື່ນໆ;

21. ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ຄວາມປອດໄພໃນຊີວິດ ແລະ ຊັບສິນຂອງປະຊາຊົນ, ອະນຸລັກ ແລະ ຄຸ້ມຄອງອາຄານ, ສະຖານທີ່ ທີ່ມີເອກະລັກທາງສິລະປະ, ວັດທະນະທຳ, ສະຖາປັດຕະຍະກຳຂອງຊາດ, ຂອງທ້ອງຖິ່ນ ທີ່ມີຄຸນຄ່າທາງດ້ານປະຫວັດສາດ;

22. ຄຸ້ມຄອງການຈັດຕັ້ງ, ພະນັກງານ-ລັດຖະກອນ; ຕິດຕາມກວດກາການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ຂອງຫ້ອງການສາຍຕັ້ງຂັ້ນແຂວງ ແລະ ອົງການທີ່ກ່ຽວຂ້ອງ;

23. ສ້າງ, ບຳລຸງ ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານການເມືອງ, ການປົກຄອງ, ວິຊາສະເພາະໃຫ້ພະນັກງານ-ລັດຖະກອນຂອງຕົນ ແລະ ພະນັກງານຂອງບ້ານ;

24. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນ ລວມທັງສະພາບການເຄື່ອນໄຫວວຽກງານຮອບດ້ານຂອງ ເທດສະບານ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ອົງການທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

25. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງຂອງອົງການປົກຄອງເທດສະບານ

### ມາດຕາ 49 (ປັບປຸງ) ໂຄງປະກອບກົງຈັກ

ອົງການປົກຄອງເທດສະບານ ມີໂຄງປະກອບກົງຈັກ ດັ່ງນີ້:

1. ຫ້ອງວ່າການເທດສະບານ;
2. ຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເທດສະບານ ຊຶ່ງສ້າງຕັ້ງຂຶ້ນ ຕາມຄວາມຮຽກຮ້ອງຕ້ອງການຕົວຈິງຂອງວຽກງານ ໂດຍການຮັບຮອງຂອງສະພາປະຊາຊົນທ້ອງຖິ່ນ.

### ມາດຕາ 50 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດຂອງຫ້ອງວ່າການເທດສະບານ

ຫ້ອງວ່າການເທດສະບານ ແມ່ນ ໂຄງປະກອບກົງຈັກໜຶ່ງ ຂອງອົງການປົກຄອງເທດສະບານ ຊຶ່ງມີພາລະບົດບາດເປັນເສນາທິການໃຫ້ຫົວໜ້າເທດສະບານ ໃນການອຳນວຍຄວບຄຸມ, ຊຸກຍູ້, ຕິດຕາມການບໍລິຫານວຽກງານຂອງເທດສະບານ, ສ້າງແຜນການ, ໂຄງການດຳເນີນງານ, ຄົ້ນຄວ້າສັງລວມ, ຄຸ້ມຄອງເອກະສານ, ເປັນໃຈກາງພົວພັນປະສານງານ, ບໍລິຫານຮັບໃຊ້ການເຄື່ອນໄຫວວຽກງານໃຫ້ແກ່ການນຳຂອງເທດສະບານ ແລະ ຄຸ້ມຄອງບໍລິຫານວຽກງານພາຍໃນຂອງຕົນ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການເທດສະບານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 51 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດຂອງຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເທດສະບານ

ຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເທດສະບານ ແມ່ນ ໂຄງປະກອບກົງຈັກໜຶ່ງ ຂອງອົງການປົກຄອງເທດສະບານ ຊຶ່ງມີພາລະບົດບາດເປັນເສນາທິການໃຫ້ອົງການປົກຄອງເທດສະບານ, ພະແນກຂັ້ນແຂວງ, ອົງການລັດທຽບເທົ່າພະແນກຂັ້ນແຂວງທາງດ້ານວິຊາການ ແລະ ການຄຸ້ມຄອງບໍລິຫານລັດ ຕາມການແບ່ງຂັ້ນຄຸ້ມຄອງ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເທດສະບານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 52 (ປັບປຸງ) ໂຄງປະກອບບຸກຄະລາກອນ**

ອົງການປົກຄອງເທດສະບານ ປະກອບດ້ວຍບຸກຄະລາກອນ ດັ່ງນີ້:

1. ຫົວໜ້າເທດສະບານ, ຮອງຫົວໜ້າເທດສະບານ;
2. ຫົວໜ້າຫ້ອງວ່າການ, ຫົວໜ້າຫ້ອງການ ແລະ ຫົວໜ້າອົງການລັດທຽບເທົ່າຫ້ອງການຂອງເທດສະບານ.

**ມາດຕາ 53 (ປັບປຸງ) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຫົວໜ້າເທດສະບານ**

ຫົວໜ້າເທດສະບານ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພາຍຫຼັງສະພາປະຊາຊົນທ້ອງຖິ່ນໄດ້ຮັບຮອງເອົາ.

**ມາດຕາ 54 (ປັບປຸງ) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຮອງຫົວໜ້າເທດສະບານ**

ຮອງຫົວໜ້າເທດສະບານ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງຫົວໜ້າເທດສະບານ.

**ມາດຕາ 55 (ປັບປຸງ) ອາຍຸການ ຂອງຫົວໜ້າເທດສະບານ**

ຫົວໜ້າເທດສະບານ ມີອາຍຸການສະໄໝລະ ຫ້າປີ ແລະ ສາມາດດຳລົງຕຳແໜ່ງຢູ່ບ່ອນເກົ່າໄດ້ບໍ່ເກີນ ສອງສະໄໝ ຕິດຕໍ່ກັນ.

ໃນກໍລະນີຫົວໜ້າເທດສະບານ ຫາກໝົດອາຍຸການແລ້ວ ແຕ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຍັງບໍ່ທັນໄດ້ແຕ່ງຕັ້ງຫົວໜ້າເທດສະບານຜູ້ໃໝ່ນັ້ນ ໃຫ້ຫົວໜ້າເທດສະບານຜູ້ເກົ່າສືບຕໍ່ປະຕິບັດໜ້າທີ່ຈົນກວ່າຈະມີການແຕ່ງຕັ້ງຜູ້ໃໝ່.

ການແຕ່ງຕັ້ງຫົວໜ້າເທດສະບານ ຕ້ອງດຳເນີນພາຍໃນ ເກົ້າສິບວັນ ຫຼັງຈາກອາຍຸການຂອງຫົວໜ້າເທດສະບານຜູ້ເກົ່າສິ້ນສຸດລົງ.

## ໝວດທີ 4
## ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຫົວໜ້າເທດສະບານ

**ມາດຕາ 56 (ປັບປຸງ) ພາລະບົດບາດ**

ຫົວໜ້າເທດສະບານ ເປັນຫົວໜ້າອົງການປົກຄອງເທດສະບານ, ເປັນຕົວແທນ ແລະ ຮັບຜິດຊອບຕໍ່ອົງການປົກຄອງແຂວງ, ນະຄອນຫຼວງ, ຊີ້ນຳ ອົງການປົກຄອງເທດສະບານປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47 ແລະ 48 ຂອງກົດໝາຍສະບັບນີ້.

**ມາດຕາ 57 (ປັບປຸງ) ສິດ ແລະ ໜ້າທີ່**

ຫົວໜ້າເທດສະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮຽກໂຮມ ແລະ ເປັນປະທານກອງປະຊຸມອົງການປົກຄອງເທດສະບານ;

2. ຊີ້ນຳ, ອຳນວຍຄວບຄຸມວຽກງານຂອງອົງການປົກຄອງເທດສະບານ, ກວດກາການປະຕິບັດມະຕິຂອງກອງປະຊຸມສະພາປະຊາຊົນທ້ອງຖິ່ນ, ມະຕິຂອງກອງປະຊຸມອົງການປົກຄອງເທດສະບານ ແລະ ການເຄື່ອນໄຫວຂອງຫ້ອງວ່າການ, ຫ້ອງການ, ອົງການລັດທຽບເທົ່າຫ້ອງການ ຂອງເທດສະບານ ທີ່ຂຶ້ນກັບຕົນ;

3. ຮັບຮອງເອົາຜົນການເລືອກຕັ້ງ, ແຕ່ງຕັ້ງ ຫຼື ປົດຕຳແໜ່ງນາຍບ້ານ, ຮອງນາຍບ້ານ ແລະ ຮັບຮອງກົດລະບຽບບ້ານ;

4. ສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບໂຄງປະກອບການຈັດຕັ້ງ ແລະ ເຂດແດນຂອງເທດສະບານ; ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ, ການກຳນົດເຂດແດນຂອງບ້ານ ແລະ ການປ່ຽນຊື່ບ້ານ;

5. ສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຮອງຫົວໜ້າເທດສະບານ ຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

6. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຫົວໜ້າຫ້ອງວ່າການ, ຫົວໜ້າຫ້ອງການ, ຫົວໜ້າອົງການລັດທຽບເທົ່າຫ້ອງການ ແລະ ຜູ້ດຳລົງຕຳແໜ່ງບໍລິຫານອື່ນຂອງເທດສະບານ;

7. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ; ສັ່ງໂຈະ ຫຼື ຍົກເລີກນິຕິກຳອື່ນ ຂອງທຸກຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເທດສະບານ ແລະ ຂັ້ນລຸ່ມ ທີ່ຂັດກັບກົດໝາຍ ຍົກເວັ້ນຄຳຕົກລົງກ່ຽວກັບການດຳເນີນຄະດີຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນ;

8. ສະເໜີຂັ້ນເທິງພິຈາລະນາໂຈະ ຫຼື ຍົກເລີກນິຕິກຳ ຂອງຂະແໜງການທີ່ຂັດກັບກົດໝາຍ;

9. ສັ່ງຈ່າຍງົບປະມານຂອງເທດສະບານ;

10. ເຂົ້າຮ່ວມກອງປະຊຸມຂອງອົງການປົກຄອງແຂວງ, ນະຄອນຫຼວງ ຕາມການເຊີນ;

11. ຮັບຜິດຊອບຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບຜົນສຳເລັດ, ຄວາມບົກພ່ອງໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ;

12. ສະຫຼຸບ, ລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງຕົນ ລວມທັງສະພາບການເຄື່ອນໄຫວວຽກງານຮອບດ້ານ ຂອງເທດສະບານໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ອົງການທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 58 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຮອງຫົວໜ້າເທດສະບານ**

ຮອງຫົວໜ້າເທດສະບານ ຊ່ວຍວຽກຫົວໜ້າເທດສະບານ ໃນການຊີ້ນຳວຽກງານຂອງອົງການປົກຄອງເທດສະບານ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າເທດສະບານ.

ໃນກໍລະນີຫົວໜ້າເທດສະບານບໍ່ສາມາດປະຕິບັດໜ້າທີ່ໄດ້ຍ້ອນເຫດຜົນໃດໜຶ່ງ ຮອງຫົວໜ້າເທດສະບານຜູ້ໄດ້ຮັບມອບໝາຍ ເປັນຜູ້ຮັກສາການແທນ.

## ໝວດທີ 5
## ກອງປະຊຸມ ຂອງອົງການປົກຄອງເທດສະບານ

**ມາດຕາ 59 (ປັບປຸງ) ກອງປະຊຸມ**

ກອງປະຊຸມຂອງອົງການປົກຄອງເທດສະບານ ເປີດຂຶ້ນເດືອນລະເທື່ອ ໂດຍແມ່ນຫົວໜ້າເທດສະບານເປັນຜູ້ຮຽກໂຮມ ແລະ ເປັນປະທານ. ຜູ້ເຂົ້າຮ່ວມກອງປະຊຸມຂອງອົງການປົກຄອງເທດສະບານ ປະກອບດ້ວຍ

ຮອງຫົວ ໜ້າເທດສະບານ, ຫົວໜ້າຫ້ອງວ່າການ, ຫົວໜ້າຫ້ອງການ, ຫົວໜ້າອົງການລັດທຽບເທົ່າຫ້ອງການຂອງເທດສະບານ. ນອກຈາກນີ້ ຖ້າຫາກມີຄວາມຈຳເປັນ ອາດເຊີນຜູ້ຕາງໜ້າຈາກພາກສ່ວນອື່ນເຂົ້າຮ່ວມນຳກໍໄດ້.

ໃນກໍລະນີມີຄວາມຈຳເປັນ ແລະ ຮີບດ່ວນ ອາດເປີດກອງປະຊຸມວິສາມັນ ຕາມການຕົກລົງຂອງຫົວໜ້າເທດສະບານ.

ໃນກອງປະຊຸມແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ຊຶ່ງເຊັນໂດຍຜູ້ບັນທຶກ ແລະ ເຊັນຢັ້ງຢືນໂດຍປະທານກອງປະຊຸມ ແລ້ວສົ່ງໃຫ້ຜູ້ເຂົ້າຮ່ວມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ. ໃນກໍລະນີມີການຕົກລົງບັນຫາສຳຄັນນັ້ນ ຕ້ອງເຮັດເປັນມະຕິຂອງກອງປະຊຸມ.

**ມາດຕາ 60 (ປັບປຸງ) ບັນຫາທີ່ຕ້ອງນຳເຂົ້າກອງປະຊຸມ**

ບັນຫາທີ່ຕ້ອງນຳເຂົ້າພິຈາລະນາແລະຕົກລົງໃນກອງປະຊຸມຂອງອົງການປົກຄອງເທດສະບານ ມີ ດັ່ງນີ້:

1. ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ການດັດແກ້ແຜນງົບປະມານປະຈຳປີ ຂອງເທດສະບານ;
2. ການກຳນົດເຂດແດນ ແລະ ໂຄງປະກອບການຈັດຕັ້ງຂອງເທດສະບານ; ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ, ການກຳນົດເຂດແດນຂອງບ້ານ ແລະ ການປ່ຽນຊື່ບ້ານ,
3. ຮ່າງນິຕິກຳຕ່າງໆ;
4. ໂຄງການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ;
5. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
6. ວຽກງານນະໂຍບາຍ ແລະ ພະນັກງານ;
7. ບົດລາຍງານຮອບດ້ານ ຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
8. ບັນຫາອື່ນ ທີ່ມີຄວາມສຳຄັນ ແລະ ຈຳເປັນ.

# ພາກທີ VI
# ນະຄອນ ແລະ ອົງການປົກຄອງນະຄອນ
## ໝວດທີ 1
## ການສ້າງຕັ້ງນະຄອນ

**ມາດຕາ 61 (ໃໝ່) ນະຄອນ**

ນະຄອນ ແມ່ນ ເມືອງ ຫຼື ເທດສະບານທີ່ມີລະດັບການພັດທະນາສູງ, ຄົບເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

ນະຄອນ ກວມເອົາທັງພື້ນທີ່ຕົວເມືອງ ແລະ ຊົນນະບົດ ຊຶ່ງປະກອບດ້ວຍຫຼາຍບ້ານ.

**ມາດຕາ 62 (ໃໝ່) ການສ້າງຕັ້ງນະຄອນ**

ນະຄອນ ຖືກສ້າງຕັ້ງ, ຍຸບເລີກ, ແຍກອອກ, ໂຮມເຂົ້າ ຫຼື ກຳນົດເຂດແດນ ໂດຍການຕົກລົງຂອງລັດຖະບານ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພາຍຫຼັງສະພາປະຊາຊົນທ້ອງຖິ່ນ ໄດ້ຮັບຮອງເອົາ.

ຂັ້ນຕອນ ແລະ ວິທີການຄົ້ນຄວ້າ ເພື່ອສ້າງຕັ້ງນະຄອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 63 (ໃໝ່) ເງື່ອນໄຂການສ້າງຕັ້ງນະຄອນ**

ໃນການສ້າງຕັ້ງນະຄອນ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ເປັນເມືອງ ຫຼື ເທດສະບານ ທີ່ມີພົນລະເມືອງແຕ່ຫົກສິບພັນຄົນຂຶ້ນໄປ ແລະ ຢູ່ພາຍໃນພື້ນທີ່ຕົວເມືອງ ຫຼື ຕົວເທດສະບານ ຕ້ອງມີ ຊາວຫ້າພັນຄົນ ຂຶ້ນໄປ;
2. ມີຄວາມໜາແໜ້ນຂອງພົນລະເມືອງພາຍໃນພື້ນທີ່ຕົວເມືອງ ຫຼື ຕົວເທດສະບານ ຊຶ່ງເປັນທີ່ຕັ້ງຂອງອົງການປົກຄອງເມືອງ ຫຼື ເທດສະບານ ແຕ່ ເກົ້າຮ້ອຍຄົນ ຂຶ້ນໄປຕໍ່ກິໂລຕາແມັດ;
3. ມີຈຳນວນຜູ້ປະກອບອາຊີບເປັນກະສິກອນຢູ່ພາຍໃນພື້ນທີ່ຕົວເມືອງ ຫຼື ຕົວເທດສະບານ ຊຶ່ງເປັນທີ່ຕັ້ງຂອງອົງການປົກຄອງເມືອງ, ເທດສະບານບໍ່ເກີນ ຊາວຫ້າສ່ວນຮ້ອຍ ຂອງຈຳນວນພົນລະເມືອງທັງໝົດທີ່ຢູ່ພາຍໃນພື້ນທີ່ຕົວເມືອງ ຫຼື ຕົວເທດສະບານ ດັ່ງກ່າວ;
4. ມີພື້ນຖານໂຄງລ່າງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ ໄດ້ຮັບການພັດທະນາໃນລະດັບສູງ ແລະ ເປັນລະບົບຄົບຊຸດ;
5. ເປັນບ້ານພັດທະນາທັງໝົດ;
6. ກຸ້ມຕົນເອງດ້ານລາຍຈ່າຍບໍລິຫານປົກກະຕິ ແລະ ມີສ່ວນແຮໄວ້ເພື່ອການລົງທຶນ.

## ໝວດທີ 2
## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການປົກຄອງນະຄອນ

**ມາດຕາ 64 (ໃໝ່) ທີ່ຕັ້ງ ແລະ ພາລະບົດບາດ**

ອົງການປົກຄອງນະຄອນ ແມ່ນ ອົງການບໍລິຫານລັດຂັ້ນເມືອງ ຊຶ່ງມີພາລະບົດບາດຄຸ້ມຄອງບໍລິຫານລັດທາງດ້ານການເມືອງ, ການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ສ້າງ ແລະ ນຳໃຊ້ຊັບພະຍາກອນມະນຸດ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນ; ຊີ້ນຳ, ກວດກາ ການຈັດຕັ້ງປະຕິບັດແຜນພັດທະນາບ້ານ, ຈັດຕັ້ງການບໍລິການສາທາລະນະ, ຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສະອາດ ແລະ ສວຍງາມໃນນະຄອນດ້ວຍເຕັກນິກ ແລະ ວິທີການທີ່ກ້າວໜ້າທັນສະໄໝ.

**ມາດຕາ 65 (ໃໝ່) ສິດ ແລະ ໜ້າທີ່**

ອົງການປົກຄອງນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບປະກັນການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ດຳລັດ, ລະບຽບການ, ມະຕິ, ຄຳສັ່ງ, ຄຳແນະນຳ ຂອງຂັ້ນເທິງ;
2. ສ້າງ ແລະ ພັດທະນານະຄອນ ໃຫ້ສີວິໄລ ແລະ ທັນສະໄໝ;
3. ຊີ້ນຳ, ຊຸກຍູ້, ປຸກລະດົມ ວຽກງານເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນທ້ອງຖິ່ນ;
4. ສ້າງ ແລະ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ; ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຕ້ານ ແລະ ສະກັດກັ້ນການສໍ້ລາດບັງຫຼວງ ແລະ ປາກົດການຫຍໍ້ທໍ້ໃນສັງຄົມ;
5. ຈັດຕັ້ງ, ອຳນວຍ, ຄວບຄຸມ ແລະ ຕິດຕາມກວດກາການເຄື່ອນໄຫວປະຕິບັດໜ້າທີ່ຂອງຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງນະຄອນ ແລະ ຂອງອົງການປົກຄອງບ້ານ;

6. ສ້າງຕັ້ງ ແລະ ຄຸ້ມຄອງໜ່ວຍງານບໍລິການຂອງລັດ, ຈັດຕັ້ງຄຸ້ມຄອງບໍລິຫານຕົວນະຄອນ ໃຫ້ມີການພັດທະນາພື້ນຖານໂຄງລ່າງ, ການບໍລິການສາທາລະນະທີ່ຈຳເປັນ, ມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສະອາດ ແລະ ສວຍງາມ;

7. ໂຄສະນາ ເຜີຍແຜ່ ແລະ ໃຫ້ຄວາມຮູ້ກ່ຽວກັບວຽກງານສຸຂານາໄມແກ່ປະຊາຊົນ, ສົ່ງເສີມດ້ານສາທາລະນະສຸກ,ພັດທະນາການສຶກສາ, ກິລາ-ກາຍຍະກຳ ແລະ ສິດສະເໝີພາບລະຫວ່າງຍິງ-ຊາຍ;

8. ປົກປັກຮັກສາ, ສົ່ງເສີມວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ທ້ອງຖິ່ນ ແລະ ຂອງເຜົ່າ; ສົ່ງເສີມການພັດທະນາສີມືແຮງງານ ແລະ ຄຸ້ມຄອງແຮງງານຕາມພາລະບົດບາດ ແລະ ຕາມການແບ່ງຂັ້ນຄຸ້ມຄອງ;

9. ອຳນວຍຄວາມສະດວກ ແລະ ຕິດຕາມການຈັດຕັ້ງປະຕິບັດໂຄງການລົງທຶນທີ່ສູນກາງ ແລະ ແຂວງ, ນະຄອນຫຼວງ ຄຸ້ມຄອງ; ສົ່ງເສີມການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດຕາມການແບ່ງຂັ້ນຄຸ້ມຄອງ;

10. ເສີມຂະຫຍາຍຄວາມສາມັກຄີຂອງປະຊາຊົນລາວບັນດາເຜົ່າ ແລະ ທຸກຊັ້ນຄົນໃນສັງຄົມ, ຄຸ້ມຄອງພົນລະເມືອງ, ຄົນຕ່າງດ້າວ, ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ, ວຽກງານເຜົ່າ ແລະ ສາສະໜາ, ປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ;

11. ພິຈາລະນາ, ໃຫ້ຄຳແນະນຳ ແລະ ແກ້ໄຂຄຳສະເໜີຂອງການຈັດຕັ້ງ ຫຼື ບຸກຄົນ ກ່ຽວກັບການກະທຳຂອງພະນັກງານ-ລັດຖະກອນ ແລະ ອົງການບໍລິຫານລັດໃນທ້ອງຖິ່ນຂອງຕົນ;

12. ຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ ແລະ ພັດທະນາຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມຕາມການແບ່ງຂັ້ນຄຸ້ມຄອງ ເພື່ອສ້າງແຫຼ່ງລາຍຮັບ, ຈັດເກັບລາຍຮັບໃຫ້ຖືກຕ້ອງ; ຄຸ້ມຄອງຫົວໜ່ວຍທຸລະກິດ, ອຸດສາຫະກຳ, ການຄ້າ, ການບໍລິການ ແລະ ອື່ນໆ;

13. ຄຸ້ມຄອງ ແລະ ປະຕິບັດແຜນລາຍຮັບ ແລະ ແຜນລາຍຈ່າຍຂອງທ້ອງຖິ່ນ; ອຳນວຍ, ຄວບຄຸມໃຫ້ອົງການທີ່ກ່ຽວຂ້ອງປະຕິບັດການສ້າງລາຍຮັບໃຫ້ຖືກຕ້ອງ, ຄົບຖ້ວນ, ທັນເວລາ ແລະ ໂປ່ງໃສ;

14. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ; ສັ່ງໂຈະ ຫຼື ຍົກເລີກນິຕິກຳອື່ນ ຂອງທຸກຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງນະຄອນ ແລະ ຂັ້ນລຸ່ມ ທີ່ຂັດກັບກົດໝາຍ ຍົກເວັ້ນຄຳຕົກລົງກ່ຽວກັບການດຳເນີນຄະດີຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນ; ສະເໜີຂັ້ນເທິງພິຈາລະນາໂຈະ ຫຼື ຍົກເລີກນິຕິກຳ ຂອງຂະແໜງການທີ່ຂັດກັບກົດໝາຍ;

15. ຄົ້ນຄວ້າໂຄງປະກອບການຈັດຕັ້ງ ແລະ ການກຳນົດເຂດແດນຂອງນະຄອນ; ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ, ກຳນົດເຂດແດນຂອງບ້ານ ແລະ ການປ່ຽນຊື່ບ້ານ;

16. ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ທຸກພາກສ່ວນເສດຖະກິດ ແລະ ປະຊາຊົນລາວບັນດາເຜົ່າ ເຂົ້າຮ່ວມການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຕ້ານປາກົດການຫຍໍ້ທໍ້ ໃນນະຄອນຂອງຕົນ;

17. ສ້າງຜັງເມືອງ, ຄຸ້ມຄອງການກໍ່ສ້າງ ແລະ ການພັດທະນາໃນພື້ນທີ່ຕົວນະຄອນ, ປັບປຸງບູລະນະໂຄງລ່າງ, ຄຸ້ມຄອງວັດທະນະທຳ-ສັງຄົມ, ກິລາ-ກາຍຍະກຳ ແລະ ການບໍລິການຂອງຕົວນະຄອນ ຊຶ່ງມີ ຖະໜົນຫົນທາງ, ໄຟຟ້າ, ນ້ຳປະປາ, ຮ່ອງລະບາຍນ້ຳ, ລະບົບບຳບັດນ້ຳເສຍ, ປ້ອງກັນຕາຝັ່ງເຈື່ອນ, ໂຮງຮຽນ, ໂຮງໝໍ, ຕະຫຼາດ, ຮ້ານກິນດື່ມ, ສະຖານບັນເທີງ, ລະບົບແສງສະຫວ່າງ, ສວນສາທາລະນະ, ປ້ອງກັນ ແລະ ແກ້ໄຂສາທາລະນະໄພ, ອະນາໄມ, ເກັບມ້ຽນ, ກຳຈັດຂີ້ເຫຍື້ອ ແລະ ອື່ນໆ;

18. ສ້າງຕັ້ງ ແລະ ຄຸ້ມຄອງການບໍລິການສາທາລະນະທີ່ຈຳເປັນ ເປັນຕົ້ນ ການຂົນສົ່ງມວນຊົນ, ວິສະວະກຳການຈໍລະຈອນໃນທ້ອງຖະໜົນ, ການຄຸ້ມຄອງຈັດສັນຄົວລົດ, ບ່ອນຈອດລົດໃນສະຖານທີ່ສາທາລະນະ ແລະ ອື່ນໆ;

19. ຄຸ້ມຄອງ, ກວດກາກິດຈະການກໍ່ສ້າງ ໃຫ້ໄດ້ມາດຕະຖານ, ມີຄວາມປອດໄພ ແລະ ທົນທານ;

20. ປົກປັກຮັກສາ ແລະ ປັບປຸງສິ່ງແວດລ້ອມ ເປັນຕົ້ນ ເຂດສະຫງວນ, ໜອງ, ບຶງ, ເຂດແຄມແມ່ນ້ຳ, ທິວທັດທຳມະຊາດ, ປ່າສະຫງວນ ແລະ ອື່ນໆ;

21. ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ຄວາມປອດໄພໃນຊີວິດ ແລະ ຊັບສິນຂອງປະຊາຊົນ, ອະນຸລັກ ແລະ ຄຸ້ມຄອງອາຄານ, ສະຖານທີ່ ທີ່ມີເອກະລັກທາງສິລະປະ, ວັດທະນະທຳ, ສະຖາປັດຕະຍະກຳຂອງຊາດ, ຂອງທ້ອງຖິ່ນ ທີ່ມີຄຸນຄ່າທາງດ້ານປະຫວັດສາດ;

22. ຄຸ້ມຄອງການຈັດຕັ້ງ, ພະນັກງານ-ລັດຖະກອນ; ຕິດຕາມກວດກາການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ຂອງຫ້ອງການສາຍຕັ້ງຂັ້ນແຂວງ ແລະ ອົງການທີ່ກ່ຽວຂ້ອງ;

23. ສ້າງ, ບຳລຸງ ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານການເມືອງ, ການປົກຄອງ, ວິຊາສະເພາະ ໃຫ້ພະນັກງານ-ລັດຖະກອນຂອງຕົນ ແລະ ພະນັກງານຂອງບ້ານ;

24. ລາຍງານສະພາບການຈັດຕັ້ງປະຕິບັດວຽກງານຂອງຕົນ ລວມທັງສະພາບການເຄື່ອນໄຫວວຽກງານຮອບດ້ານຂອງ ນະຄອນ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ອົງການທີ່ກ່ຽວຂ້ອງຢ່າງເປັນປົກກະຕິ;

25. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງຂອງອົງການປົກຄອງນະຄອນ

### ມາດຕາ 66 (ໃໝ່) ໂຄງປະກອບກົງຈັກ

ອົງການປົກຄອງນະຄອນ ມີໂຄງປະກອບກົງຈັກ ດັ່ງນີ້:

1. ຫ້ອງວ່າການນະຄອນ;
2. ຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງນະຄອນ ຊຶ່ງສ້າງຕັ້ງຂຶ້ນຕາມຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງວຽກງານ ໂດຍການຮັບຮອງຂອງສະພາປະຊາຊົນທ້ອງຖິ່ນ.

### ມາດຕາ 67 (ໃໝ່) ທີ່ຕັ້ງ ແລະ ພາລະບົດບາດຂອງຫ້ອງວ່າການນະຄອນ

ຫ້ອງວ່າການນະຄອນ ແມ່ນ ໂຄງປະກອບກົງຈັກໜຶ່ງ ຂອງອົງການປົກຄອງນະຄອນ ຊຶ່ງມີພາລະບົດບາດເປັນເສນາທິການໃຫ້ເຈົ້ານະຄອນ ໃນການອຳນວຍຄວບຄຸມ, ຊຸກຍູ້, ຕິດຕາມການບໍລິຫານວຽກງານຂອງນະຄອນ, ສ້າງແຜນການ, ໂຄງການດຳເນີນງານ, ຄົ້ນຄວ້າສັງລວມ, ຄຸ້ມຄອງເອກະສານ, ເປັນໃຈກາງພົວພັນປະສານງານ, ບໍລິຫານຮັບໃຊ້ການເຄື່ອນໄຫວວຽກງານໃຫ້ແກ່ການນຳຂອງນະຄອນ ແລະ ຄຸ້ມຄອງບໍລິຫານວຽກງານພາຍໃນຂອງຕົນ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການນະຄອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 68 (ໃໝ່) ທີ່ຕັ້ງ ແລະ ພາລະບົດບາດຂອງຫ້ອງການ, ອົງການລັດທຽບເທົ່າຫ້ອງການ ຂອງນະຄອນ**

ຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງນະຄອນ ແມ່ນ ໂຄງປະກອບກົງຈັກໜຶ່ງ ຂອງອົງການປົກຄອງນະຄອນ ຊຶ່ງມີພາລະບົດບາດເປັນເສນາທິການ ໃຫ້ອົງການປົກຄອງນະຄອນ, ພະແນກຂັ້ນແຂວງ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ທາງດ້ານວິຊາການ ແລະ ການຄຸ້ມຄອງບໍລິຫານລັດຕາມການແບ່ງຂັ້ນຄຸ້ມຄອງ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງນະຄອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 69 (ໃໝ່) ໂຄງປະກອບບຸກຄະລາກອນ**

ອົງການປົກຄອງນະຄອນ ປະກອບດ້ວຍບຸກຄະລາກອນ ດັ່ງນີ້:

1. ເຈົ້ານະຄອນ, ຮອງເຈົ້ານະຄອນ;
2. ຫົວໜ້າຫ້ອງວ່າການ, ຫົວໜ້າຫ້ອງການ ແລະ ຫົວໜ້າອົງການລັດທຽບເທົ່າຫ້ອງການຂອງນະຄອນ.

**ມາດຕາ 70 (ໃໝ່) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ເຈົ້ານະຄອນ**

ເຈົ້ານະຄອນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພາຍຫຼັງສະພາປະຊາຊົນທ້ອງຖິ່ນ ໄດ້ຮັບຮອງເອົາ.

**ມາດຕາ 71 (ໃໝ່) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຮອງເຈົ້ານະຄອນ**

ຮອງເຈົ້ານະຄອນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງເຈົ້ານະຄອນ.

**ມາດຕາ 72 (ໃໝ່) ອາຍຸການຂອງເຈົ້ານະຄອນ**

ເຈົ້ານະຄອນ ມີອາຍຸການສະໄໝລະ ຫ້າປີ ແລະ ສາມາດດຳລົງຕຳແໜ່ງຢູ່ບ່ອນເກົ່າ ໄດ້ບໍ່ເກີນ ສອງສະໄໝຕິດຕໍ່ກັນ.

ໃນກໍລະນີເຈົ້ານະຄອນ ຫາກໝົດອາຍຸການແລ້ວ ແຕ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຍັງບໍ່ທັນໄດ້ແຕ່ງຕັ້ງເຈົ້ານະຄອນຜູ້ໃໝ່ນັ້ນ ໃຫ້ເຈົ້ານະຄອນຜູ້ເກົ່າສືບຕໍ່ປະຕິບັດໜ້າທີ່ຈົນກວ່າຈະມີການແຕ່ງຕັ້ງຜູ້ໃໝ່.

ການແຕ່ງຕັ້ງເຈົ້ານະຄອນ ຕ້ອງດຳເນີນພາຍໃນ ເກົ້າສິບວັນ ຫຼັງຈາກອາຍຸການຂອງເຈົ້ານະຄອນຜູ້ເກົ່າສິ້ນສຸດລົງ.

## ໝວດທີ 4
## ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງເຈົ້ານະຄອນ

ມາດຕາ 73 (ໃໝ່) ພາລະບົດບາດ

ເຈົ້ານະຄອນ ເປັນຫົວໜ້າອົງການປົກຄອງນະຄອນ, ເປັນຕົວແທນ ແລະ ຮັບຜິດຊອບຕໍ່ອົງການປົກຄອງແຂວງ, ນະຄອນຫຼວງ, ຊີ້ນຳ ອົງການປົກຄອງນະຄອນ ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 64 ແລະ 65 ຂອງກົດໝາຍສະບັບນີ້.

**ມາດຕາ 74 (ໃໝ່) ສິດ ແລະ ໜ້າທີ່**

ເຈົ້ານະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮຽກໂຮມ ແລະ ເປັນປະທານກອງປະຊຸມອົງການປົກຄອງນະຄອນ;

2. ຊີ້ນໍາ, ອໍານວຍຄວບຄຸມວຽກງານຂອງອົງການປົກຄອງນະຄອນ, ກວດກາການປະຕິບັດມະຕິຂອງກອງປະຊຸມສະພາປະຊາຊົນທ້ອງຖິ່ນ, ມະຕິຂອງກອງປະຊຸມອົງການປົກຄອງນະຄອນ ແລະ ການເຄື່ອນໄຫວຂອງຫ້ອງວ່າການ, ຫ້ອງການ, ອົງການລັດທຽບເທົ່າຫ້ອງການ ຂອງນະຄອນ ທີ່ຂຶ້ນກັບຕົນ;

3. ຮັບຮອງເອົາຜົນການເລືອກຕັ້ງ, ແຕ່ງຕັ້ງ ຫຼື ປົດຕໍາແໜ່ງນາຍບ້ານ, ຮອງນາຍບ້ານ ແລະ ຮັບຮອງກົດລະບຽບບ້ານ;

4. ສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບໂຄງປະກອບການຈັດຕັ້ງ ແລະ ເຂດແດນຂອງນະຄອນ; ການສ້າງຕັ້ງ, ຍຸບເລີກ,ໂຮມເຂົ້າ, ແຍກອອກ, ການກໍານົດເຂດແດນຂອງບ້ານ ແລະ ການປ່ຽນຊື່ບ້ານ;

5. ສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຮອງເຈົ້ານະຄອນ ຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

6. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຫົວໜ້າຫ້ອງວ່າການ, ຫົວໜ້າຫ້ອງການ, ຫົວໜ້າອົງການລັດທຽບເທົ່າຫ້ອງການ ແລະ ຜູ້ດໍາລົງຕໍາແໜ່ງບໍລິຫານອື່ນຂອງນະຄອນ;

7. ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ; ສັ່ງໂຈະ ຫຼື ຍົກເລີກນິຕິກໍາອື່ນຂອງທຸກຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງນະຄອນ ແລະ ຂັ້ນລຸ່ມ ທີ່ຂັດກັບກົດໝາຍ ຍົກເວັ້ນຄໍາຕົກລົງກ່ຽວກັບການດໍາເນີນຄະດີຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນ;

8. ສະເໜີຂັ້ນເທິງພິຈາລະນາໂຈະ ຫຼື ຍົກເລີກນິຕິກໍາ ຂອງຂະແໜງການທີ່ຂັດກັບກົດໝາຍ;

9. ສັ່ງຈ່າຍງົບປະມານຂອງນະຄອນ;

10. ເຂົ້າຮ່ວມກອງປະຊຸມຂອງອົງການປົກຄອງແຂວງ, ນະຄອນຫຼວງ ຕາມການເຊີນ;

11. ຮັບຜິດຊອບຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບຜົນສໍາເລັດ, ຄວາມບົກພ່ອງໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ;

12. ສະຫຼຸບ, ລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງຕົນ ລວມທັງສະພາບການເຄື່ອນໄຫວວຽກງານຮອບດ້ານຂອງນະຄອນ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ອົງການທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 75 (ໃໝ່) ສິດ ແລະ ໜ້າທີ່ ຂອງຮອງເຈົ້ານະຄອນ**

ຮອງເຈົ້ານະຄອນ ຊ່ວຍວຽກເຈົ້ານະຄອນ ໃນການຊີ້ນໍາວຽກງານຂອງອົງການປົກຄອງນະຄອນ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງເຈົ້ານະຄອນ.

ໃນກໍລະນີເຈົ້ານະຄອນບໍ່ສາມາດປະຕິບັດໜ້າທີ່ໄດ້ຍ້ອນເຫດຜົນໃດໜຶ່ງ ຮອງເຈົ້ານະຄອນຜູ້ໄດ້ຮັບມອບໝາຍ ເປັນຜູ້ຮັກສາການແທນ.

## ໝວດທີ 5
## ກອງປະຊຸມ ຂອງອົງການປົກຄອງນະຄອນ

**ມາດຕາ 76 (ໃໝ່) ກອງປະຊຸມ**

ກອງປະຊຸມຂອງອົງການປົກຄອງນະຄອນ ເປີດຂຶ້ນເດືອນລະເທື່ອ ໂດຍແມ່ນເຈົ້ານະຄອນເປັນຜູ້ຮຽກໂຮມ ແລະ ເປັນປະທານ. ຜູ້ເຂົ້າຮ່ວມກອງປະຊຸມ ປະກອບດ້ວຍ ຮອງເຈົ້ານະຄອນ, ຫົວໜ້າຫ້ອງວ່າການ, ຫົວໜ້າຫ້ອງການ, ຫົວໜ້າອົງການລັດທຽບເທົ່າຫ້ອງການຂອງນະຄອນ. ນອກຈາກນີ້ ຖ້າເຫັນວ່າມີຄວາມຈໍາເປັນ ອາດເຊີນຜູ້ຕາງໜ້າຈາກພາກສ່ວນອື່ນເຂົ້າຮ່ວມນໍາກໍໄດ້.

ໃນກໍລະນີມີຄວາມຈໍາເປັນ ແລະ ຮີບດ່ວນ ອາດເປີດກອງປະຊຸມວິສາມັນ ຕາມການຕົກລົງຂອງເຈົ້ານະຄອນ.

ໃນກອງປະຊຸມແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ຊຶ່ງເຊັນໂດຍຜູ້ບັນທຶກ ແລະ ເຊັນຢັ້ງຢືນໂດຍປະທານກອງປະຊຸມ ແລ້ວສົ່ງໃຫ້ຜູ້ເຂົ້າຮ່ວມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ. ໃນກໍລະນີມີການຕົກລົງບັນຫາສໍາຄັນນັ້ນ ຕ້ອງເຮັດເປັນມະຕິຂອງກອງປະຊຸມ.

**ມາດຕາ 77 (ໃໝ່) ບັນຫາທີ່ຕ້ອງນໍາເຂົ້າກອງປະຊຸມ**

ບັນຫາທີ່ຕ້ອງນໍາເຂົ້າພິຈາລະນາ ແລະ ຕົກລົງໃນກອງປະຊຸມຂອງອົງການປົກຄອງນະຄອນ ມີ ດັ່ງນີ້:

1. ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ການດັດແກ້ແຜນງົບປະມານປະຈໍາປີ ຂອງນະຄອນ;
2. ການກໍານົດເຂດແດນ ແລະ ໂຄງປະກອບການຈັດຕັ້ງຂອງນະຄອນ; ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ, ການກໍານົດເຂດແດນຂອງບ້ານ ແລະ ການປ່ຽນຊື່ບ້ານ,
3. ຮ່າງນິຕິກໍາຕ່າງໆ;
4. ໂຄງການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ;
5. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
6. ວຽກງານນະໂຍບາຍ ແລະ ພະນັກງານ;
7. ບົດລາຍງານຮອບດ້ານ ຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
8. ບັນຫາອື່ນ ທີ່ມີຄວາມສໍາຄັນ ແລະ ຈໍາເປັນ.

# ພາກທີ VII
# ບ້ານ ແລະ ອົງການປົກຄອງບ້ານ
## ໝວດທີ 1
## ການສ້າງຕັ້ງບ້ານ

**ມາດຕາ 78 (ປັບປຸງ) ບ້ານ**

ບ້ານ ແມ່ນ ເຂດການປົກຄອງທ້ອງຖິ່ນຂັ້ນຮາກຖານທີ່ຂຶ້ນກັບເມືອງ, ເທດສະບານ, ນະຄອນ.

ບ້ານໜຶ່ງ ປະກອບດ້ວຍ ຫຼາຍຄອບຄົວ, ມີເຂດນໍ້າແດນດິນທີ່ລັດໄດ້ມອບສິດໃຫ້ປົກປັກຮັກສາ, ນໍາໃຊ້ ແລະ ພັດທະນາ.

**ມາດຕາ 79 ການສ້າງຕັ້ງບ້ານ**

ບ້ານ ຖືກສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ກຳນົດເຂດແດນ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ.

**ມາດຕາ 80 ເງື່ອນໄຂການສ້າງຕັ້ງບ້ານ**

ໃນການສ້າງຕັ້ງບ້ານ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ທີ່ຕັ້ງພູມສາດເໝາະສົມແກ່ການປົກຄອງ;
2. ຈຳນວນພົນລະເມືອງ:
   - ບ້ານຢູ່ໃນຕົວເມືອງ ຕ້ອງມີພົນລະເມືອງຢ່າງໜ້ອຍ ໜຶ່ງພັນຄົນ;
   - ບ້ານຢູ່ເຂດທົ່ງພຽງ ຕ້ອງມີພົນລະເມືອງຢ່າງໜ້ອຍ ຫ້າຮ້ອຍຄົນ;
   - ບ້ານຢູ່ເຂດພູດອຍ, ຫ່າງໄກສອກຫຼີກ ຕ້ອງມີພົນລະເມືອງຢ່າງໜ້ອຍ ສອງຮ້ອຍຄົນ;
3. ເງື່ອນໄຂພັດທະນາເສດຖະກິດ-ສັງຄົມໝັ້ນຄົງ.

## ໝວດທີ 2
## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ

**ມາດຕາ 81 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ**

ອົງການປົກຄອງບ້ານ ແມ່ນ ການຈັດຕັ້ງບໍລິຫານທີ່ລັດ ແລະ ປະຊາຊົນຈັດຕັ້ງຂຶ້ນ ເພື່ອຄຸ້ມຄອງບໍລິຫານບ້ານ ຊຶ່ງມີພາລະບົດບາດເປັນຕົວແທນ ແລະ ຮັບຜິດຊອບຕໍ່ອົງການປົກຄອງເມືອງ, ເທດສະບານ, ນະຄອນ ແລະ ປະຊາຊົນໃນການຄຸ້ມຄອງບໍລິຫານ, ການພັດທະນາເສດຖະກິດ,ວັດທະນະທຳ-ສັງຄົມ, ການປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ການອຳນວຍຄວາມສະດວກ ແລະ ໃຫ້ການບໍລິການແກ່ປະຊາຊົນ, ການອະນຸລັກຮັກສາຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນ ໃນຂອບເຂດການຄຸ້ມຄອງຂອງຕົນ.

**ມາດຕາ 82 (ໃໝ່) ສິດ ແລະ ໜ້າທີ່**

ອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຊື່ອມຊຶມ ແລະ ເຜີຍແຜ່ແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ດຳລັດ, ມະຕິ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳອື່ນຂອງຂັ້ນເທິງ ໃຫ້ປະຊາຊົນພາຍໃນບ້ານຂອງຕົນ;
2. ປະຕິບັດ ລັດຖະທຳມະນູນ, ກົດໝາຍ, ດຳລັດ, ມະຕິ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳອື່ນຂອງຂັ້ນເທິງ;
3. ສຶກສາອົບຮົມ, ປຸກລະດົມ, ເຕົ້າໂຮມຄວາມສາມັກຄີ ຂອງປະຊາຊົນລາວບັນດາເຜົ່າ, ຊຸກຍູ້ການປະຕິບັດສິດ ແລະ ພັນທະຂອງພົນລະເມືອງ;
4. ສ້າງ ແລະ ຈັດຕັ້ງປະຕິບັດແຜນພັດທະນາບ້ານ;
5. ພັດທະນາ ແລະ ປັບປຸງພື້ນຖານໂຄງລ່າງ, ວັດຖຸ-ເຕັກນິກ, ການຄຸ້ມຄອງ, ນຳໃຊ້ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນ ຕາມການແບ່ງຂັ້ນຄຸ້ມຄອງ;
6. ອະນຸລັກຮັກສາ, ເສີມຂະຫຍາຍມູນເຊື້ອ, ວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ທ້ອງຖິ່ນ ແລະ ຂອງເຜົ່າ;

7. ຊຸກຍູ້, ສົ່ງເສີມການດໍາລົງຊີວິດຂອງປະຊາຊົນ ໃຫ້ຖືກຕ້ອງຕາມຫຼັກສຸຂະນາໄມ, ເອົາໃຈໃສ່ ແລະ ສົ່ງເສີມສຸຂະພາບ ແມ່ ແລະ ເດັກ, ຜູ້ສູງອາຍຸ, ເບິ່ງແຍງຜູ້ດ້ອຍໂອກາດ, ຜູ້ຕົກທຸກໄດ້ຍາກ, ຊຸກຍູ້ ແລະ ຮັບປະກັນໃຫ້ເດັກໃນເກນອາຍຸຮຽນ ໄດ້ສຶກສາຮໍ່າຮຽນ;

8. ອໍານວຍຄວາມສະດວກ ໃຫ້ແກ່ການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງໂຄງການ ຫຼື ທຸລະກິດຂອງພາກລັດ ແລະ ເອກະຊົນທັງພາຍໃນ ແລະ ຕ່າງປະເທດທີ່ໄດ້ຮັບອະນຸຍາດລົງທຶນຢ່າງຖືກຕ້ອງ ຢູ່ພາຍໃນຂອບເຂດຄວາມຮັບຜິດຊອບຂອງບ້ານ;

9. ຈັດຕັ້ງປະຕິບັດວຽກງານພັດທະນາ ແລະ ລຶບລ້າງຄວາມທຸກຍາກຢູ່ໃນບ້ານຕົນ ຕາມທິດຂອງຂັ້ນເທິງ, ສ້າງເງື່ອນໄຂໃຫ້ປະຊາຊົນມີບ່ອນທໍາມາຫາກິນ, ມີອາຊີບທີ່ໝັ້ນຄົງ ແລະ ມີວຽກເຮັດງານທໍາ;

10. ຄຸ້ມຄອງ, ບູລະນະ ແລະ ປົກປັກຮັກສາເຂດນໍ້າແດນດິນ, ແຫຼ່ງນໍ້າ, ປ່າໄມ້, ສັດປ່າ, ສິ່ງແວດລ້ອມ, ສະຖານທີ່ວັດທະນະທໍາ, ໂຮງຮຽນ, ໂຮງໝໍ, ສຸກສາລາ, ສາສະໜາສະຖານ ແລະ ສາທາລະນະສົມບັດອື່ນໃນເຂດບ້ານຂອງຕົນ;

11. ຄຸ້ມຄອງການຈັດຕັ້ງເສດຖະກິດ-ສັງຄົມພາຍໃນບ້ານ ຕາມການແບ່ງຂັ້ນຄຸ້ມຄອງ ເຊັ່ນ ຮ້ານຂາຍເຄື່ອງຍ່ອຍ, ຮ້ານບໍລິການ, ໜ່ວຍທັດຖະກໍາ, ການສິນເຊື່ອ, ກອງທຶນ, ສະມາຄົມວິຊາຊີບ ແລະ ອື່ນໆ;

12. ເກັບລາຍຮັບ, ຄຸ້ມຄອງລາຍຈ່າຍ ຕາມການມອບໝາຍຂອງຂັ້ນເມືອງ;

13. ຊຸກຍູ້, ສົ່ງເສີມ, ສ້າງເງື່ອນໄຂອໍານວຍຄວາມສະດວກ ໃຫ້ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ທຸກພາກສ່ວນເສດຖະກິດ ແລະ ປະຊາຊົນລາວບັນດາເຜົ່າ ເຂົ້າຮ່ວມການພັດທະນາບ້ານ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ໃນບ້ານ;

14. ຄຸ້ມຄອງພົນລະເມືອງ, ຄົນຕ່າງດ້າວ, ຄົນຕ່າງປະເທດ, ຄົນບໍ່ມີສັນຊາດທີ່ຕັ້ງຖິ່ນຖານ ແລະ ຍົກຍ້າຍມາຢູ່ໃນບ້ານ;

15. ເປັນເຈົ້າການຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ພາຍໃນບ້ານ;

16. ແກ້ໄຂຄໍາສະເໜີ, ສຶກສາອົບຮົມ ແລະ ໄກ່ເກ່ຍຂໍ້ຂັດແຍ່ງຂອງປະຊາຊົນ;

17. ຄົ້ນຄວ້າກົດລະບຽບບ້ານ ແລະ ລະບຽບການອື່ນ ໃຫ້ສອດຄ່ອງກັບກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງຊາດ ແລະ ທ້ອງຖິ່ນ;

18. ຄົ້ນຄວ້າ ກ່ຽວກັບການປັບປຸງການຈັດຕັ້ງຂອງບ້ານ;

19. ຄົ້ນຄວ້າບັນຫາທີ່ມີຜົນກະທົບທາງລົບ ຕໍ່ສະພາບແວດລ້ອມ, ເງື່ອນໄຂການດໍາລົງຊີວິດຂອງປະຊາຊົນ ແລະ ຜົນປະໂຫຍດລວມຂອງບ້ານ ທີ່ເກີດຈາກໂຄງການລົງທຶນຂອງລັດ, ເອກະຊົນພາຍໃນ ແລະ ຕ່າງປະເທດ;

20. ຮ່ວມມື ແລະ ອໍານວຍຄວາມສະດວກໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການເກັບສະຖິຕິ, ຂຶ້ນທະບຽນ, ເກັບຄ່າທໍານຽມນໍາໃຊ້ທີ່ດິນ ແລະ ສ່ວຍສາອາກອນພາຍໃນບ້ານ; ຄຸ້ມຄອງ ແລະ ນໍາໃຊ້ລາຍຮັບຂອງບ້ານ;

21. ພົວພັນ ປະສານສົມທົບກັບບ້ານໃກ້ຄຽງ, ຂະແໜງການຂອງຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນສູນກາງທີ່ຕັ້ງຢູ່ໃນຂອບເຂດບ້ານຂອງຕົນ ໃນການປະຕິບັດໜ້າທີ່ວຽກງານ ເພື່ອຜົນປະໂຫຍດຂອງບ້ານ;

22. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນ ລວມທັງສະພາບການຮອບດ້ານຂອງບ້ານໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຢ່າງເປັນປົກກະຕິ;

23. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງຂອງອົງການປົກຄອງບ້ານ

### ມາດຕາ 83 (ປັບປຸງ) ໂຄງປະກອບກົງຈັກ

ອົງການປົກຄອງບ້ານ ມີໂຄງປະກອບກົງຈັກ ດັ່ງນີ້:

1. ໜ່ວຍງານບໍລິຫານ ແລະ ການປົກຄອງ;
2. ໜ່ວຍງານພັກ ແລະ ອົງການຈັດຕັ້ງມະຫາຊົນ;
3. ໜ່ວຍງານເສດຖະກິດ-ການເງິນ;
4. ໜ່ວຍງານວັດທະນະທຳ-ສັງຄົມ;
5. ໜ່ວຍງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ສິດ ແລະ ໜ້າທີ່ ຂອງແຕ່ລະໜ່ວຍງານດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 84 (ປັບປຸງ) ໂຄງປະກອບບຸກຄະລາກອນ

ອົງການປົກຄອງບ້ານ ປະກອບດ້ວຍບຸກຄະລາກອນ ດັ່ງນີ້:

1. ນາຍບ້ານ;
2. ຮອງນາຍບ້ານ ສອງຫາ ສີ່ຄົນ ຕາມຂະໜາດຂອງບ້ານ;
3. ຫົວໜ້າ ແລະ ຮອງຫົວໜ້າໜ່ວຍງານ.

### ມາດຕາ 85 (ປັບປຸງ) ການເລືອກຕັ້ງນາຍບ້ານ

ນາຍບ້ານໄດ້ຮັບການເລືອກຕັ້ງຈາກປະຊາຊົນຜູ້ມີສິດເລືອກຕັ້ງພາຍໃນບ້ານ, ຖືກຮັບຮອງ ແລະ ແຕ່ງຕັ້ງ ໂດຍ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ.

ໃນກໍລະນີຈຳເປັນ ນາຍບ້ານສາມາດໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍກົງຈາກເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແຕ່ຕ້ອງຊີ້ແຈງໃຫ້ປະຊາຊົນພາຍໃນບ້ານນັ້ນເຂົ້າໃຈ.

ຮອງນາຍບ້ານ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການສະເໜີຂອງນາຍບ້ານ.

ນາຍບ້ານ ແລະ ຮອງນາຍບ້ານ ມີອາຍຸການສະໄໝລະ ຫ້າປີ, ສາມາດໄດ້ຮັບການເລືອກຕັ້ງ ຫຼື ແຕ່ງຕັ້ງຄືນໃໝ່.

## ໝວດທີ 4
## ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງນາຍບ້ານ

### ມາດຕາ 86 (ປັບປຸງ) ພາລະບົດບາດ

ນາຍບ້ານ ເປັນຫົວໜ້າອົງການປົກຄອງບ້ານ, ເປັນຕົວແທນ ແລະ ຮັບຜິດຊອບຕໍ່ອົງການປົກຄອງເມືອງ, ເທດສະບານ, ນະຄອນ ແລະ ປະຊາຊົນລາວບັນດາເຜົ່າພາຍໃນບ້ານ, ຊີ້ນຳ ອົງການປົກຄອງບ້ານ ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 81 ແລະ 82 ຂອງກົດໝາຍສະບັບນີ້.

**ມາດຕາ 87 (ປັບປຸງ) ສິດ ແລະ ໜ້າທີ່**

ນາຍບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳນົດສະຖານທີ່ປະຊຸມ, ຮຽກໂຮມປະຊຸມອົງການປົກຄອງບ້ານ, ກອງປະຊຸມບ້ານ ແລະ ເປັນປະທານກອງປະຊຸມ;

2. ຊີ້ນຳ, ອຳນວຍຄວບຄຸມວຽກງານ ຂອງອົງການປົກຄອງບ້ານ;

3. ສະເໜີ ປັບປຸງໂຄງປະກອບກົງຈັກຂອງອົງການປົກຄອງບ້ານ;

4. ຄັດເລືອກຮອງນາຍບ້ານ, ຫົວໜ້າ ແລະ ຮອງຫົວໜ້າໜ່ວຍງານ ຂອງອົງການປົກຄອງບ້ານ ເພື່ອສະເໜີໃຫ້ກອງປະຊຸມບ້ານຮັບຮອງເອົາແລ້ວນຳສະເໜີເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແຕ່ງຕັ້ງ;

5. ກວດກາການປະຕິບັດໜ້າທີ່ ແລະ ສະເໜີປົດຕຳແໜ່ງຮອງນາຍບ້ານ, ຫົວໜ້າ, ຮອງຫົວໜ້າ ໜ່ວຍງານຂອງອົງການປົກຄອງບ້ານ ເມື່ອຜູ້ກ່ຽວມີຄວາມຜິດ ແລະ ປະລະໜ້າທີ່ ເພື່ອໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາ;

6. ສະເໜີຂັ້ນເທິງພິຈາລະນາແກ້ໄຂບັນຫາທີ່ມີຜົນກະທົບທາງລົບຕໍ່ສະພາບແວດລ້ອມ, ເງື່ອນໄຂ ການດຳລົງຊີວິດຂອງປະຊາຊົນ ແລະ ຜົນປະໂຫຍດລວມຂອງບ້ານ ທີ່ເກີດຈາກໂຄງການລົງທຶນຂອງລັດ, ເອກະຊົນ ພາຍໃນ ແລະ ຕ່າງປະເທດ;

7. ອອກກົດລະບຽບບ້ານ, ແຈ້ງການ ແລະ ລະບຽບການອື່ນ ໂດຍສອດຄ່ອງກັບກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງຊາດ ແລະ ທ້ອງຖິ່ນ;

8. ອອກໜັງສື ແລະ ໃບຢັ້ງຢືນ ໃຫ້ປະຊາຊົນ ແລະ ການຈັດຕັ້ງຕາມການແບ່ງຂັ້ນຄຸ້ມຄອງຂອງ ຂະແໜງການ;

9. ອຳນວຍຄວາມສະດວກ, ສ້າງເງື່ອນໄຂ, ຕິດຕາມ ແລະ ລາຍງານການປະຕິບັດໜ້າທີ່ຂອງ ພະນັກງານ-ລັດຖະກອນ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ລົງເຄື່ອນໄຫວວຽກງານຢູ່ບ້ານ ໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຢ່າງເປັນປົກກະຕິ;

10. ນຳໃຊ້ກົນໄກ ແລະ ມາດຕະການທີ່ກຳນົດໄວ້ໃນກົດໝາຍ, ກົດລະບຽບບ້ານ ໃນການຄຸ້ມຄອງ ບ້ານ;

11. ໄດ້ຮັບນະໂຍບາຍອຸດໜູນ ຕາມລະບຽບການ;

12. ສະຫຼຸບ, ລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງຕົນ ລວມທັງສະພາບການຮອບດ້ານ ຂອງບ້ານໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 88 ສິດ ແລະ ໜ້າທີ່ຂອງຮອງນາຍບ້ານ**

ຮອງນາຍບ້ານ ຊ່ວຍວຽກນາຍບ້ານ ໃນການຊີ້ນຳວຽກງານຂອງອົງການປົກຄອງບ້ານ ແລະ ຮັບຜິດຊອບ ວຽກງານໃດໜຶ່ງ ຕາມການມອບໝາຍຂອງນາຍບ້ານ.

ໃນກໍລະນີນາຍບ້ານບໍ່ສາມາດປະຕິບັດໜ້າທີ່ໄດ້ຍ້ອນເຫດຜົນໃດໜຶ່ງ ຮອງນາຍບ້ານຜູ້ໄດ້ຮັບມອບໝາຍ ເປັນຜູ້ຮັກສາການແທນ.

## ໝວດທີ 5
## ກອງປະຊຸມອົງການປົກຄອງບ້ານ ແລະ ກອງປະຊຸມບ້ານ

**ມາດຕາ 89 (ປັບປຸງ) ກອງປະຊຸມ**

ກອງປະຊຸມ ຂອງອົງການປົກຄອງບ້ານ ເປີດຂຶ້ນເດືອນລະເທື່ອ ໂດຍແມ່ນນາຍບ້ານເປັນຜູ້ຮຽກໂຮມ ແລະ ເປັນປະທານ. ຜູ້ເຂົ້າຮ່ວມກອງປະຊຸມ ປະກອບດ້ວຍຮອງນາຍບ້ານ, ຫົວໜ້າໜ່ວຍງານ. ນອກຈາກນີ້ ຖ້າເຫັນວ່າມີຄວາມຈຳເປັນ ອາດເຊີນຜູ້ຕາງໜ້າຈາກພາກສ່ວນອື່ນ ເຂົ້າຮ່ວມນຳກໍໄດ້.

ໃນກໍລະນີຈຳເປັນ ແລະ ຮີບດ່ວນ ອາດເປີດກອງປະຊຸມວິສາມັນ ຕາມການຕົກລົງຂອງນາຍບ້ານ.

ໃນກອງປະຊຸມແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກຊຶ່ງເຊັນໂດຍຜູ້ບັນທຶກ ແລະ ເຊັນຢັ້ງຢືນ ໂດຍປະທານກອງປະຊຸມ ແລ້ວສົ່ງໃຫ້ຜູ້ເຂົ້າຮ່ວມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ.

***ມາດຕາ 90 (ປັບປຸງ) ບັນຫາທີ່ຕ້ອງນຳເຂົ້າກອງປະຊຸມ***

ບັນຫາທີ່ຕ້ອງນຳເຂົ້າພິຈາລະນາ ແລະ ຕົກລົງໃນກອງປະຊຸມຂອງອົງການປົກຄອງບ້ານ ມີ ດັ່ງນີ້:

1. ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນລາຍຮັບ-ລາຍຈ່າຍ ຂອງບ້ານ;
2. ການກຳນົດໂຄງປະກອບການຈັດຕັ້ງຂອງອົງການປົກຄອງບ້ານ;
3. ຮ່າງກົດລະບຽບບ້ານ;
4. ໂຄງການພັດທະນາຂອງບ້ານ;
5. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
6. ບົດລາຍງານຮອບດ້ານ ຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ;
7. ບັນຫາອື່ນ ທີ່ມີຄວາມສຳຄັນ ແລະ ຈຳເປັນ.

**ມາດຕາ 91 (ປັບປຸງ) ກອງປະຊຸມບ້ານ**

ນາຍບ້ານ ເປັນຜູ້ຮຽກໂຮມກອງປະຊຸມບ້ານ,ກອງປະຊຸມບ້ານປະກອບດ້ວຍ ນາຍບ້ານ, ຮອງນາຍບ້ານ, ຫົວໜ້າໜ່ວຍງານ, ຫົວໜ້າໜ່ວຍ, ຫົວໜ້າຄອບຄົວ ແລະ ອົງການຈັດຕັ້ງທີ່ມີຢູ່ໃນບ້ານ ຊຶ່ງຈັດຂຶ້ນ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ.

## ພາກທີ VIII
## ລະບອບວິທີເຮັດວຽກ ແລະ ການເງິນ ຂອງອົງການປົກຄອງທ້ອງຖິ່ນ

**ມາດຕາ 92 (ປັບປຸງ) ລະບອບວິທີເຮັດວຽກ**

ອົງການປົກຄອງທ້ອງຖິ່ນ ເຄື່ອນໄຫວວຽກງານຕາມລະບອບວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ;

2. ເຮັດວຽກຢ່າງມີແຜນການ, ແຜນງານ, ໂຄງການ, ມີການກຳນົດເວລາ, ມີການຄິດໄລ່ປະສິດທິຜົນ ໂດຍອີງຕາມຈຸດພິເສດ ແລະ ສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ;

3. ປະສານສົມທົບກັບການຈັດຕັ້ງທີ່ກ່ຽວຂ້ອງ;

4. ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບການເຄື່ອນໄຫວວຽກງານຢູ່ທ້ອງຖິ່ນຂອງຕົນ ແລ້ວລາຍງານໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ.

ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ຕ້ອງໄດ້ຮັບການກວດກາຈາກສະພາປະຊາຊົນທ້ອງຖິ່ນ, ອົງການກວດກາຂັ້ນຂອງຕົນ ແລະ ຂອງຂັ້ນເທິງຢ່າງເປັນປົກກະຕິ.

**ມາດຕາ 93 (ປັບປຸງ) ການເງິນ**

ການເງິນຂອງອົງການປົກຄອງທ້ອງຖິ່ນ ແບ່ງອອກເປັນສອງຂັ້ນຫົວໜ່ວຍງົບປະມານ ຄື ຫົວໜ່ວຍງົບປະມານຂັ້ນແຂວງ, ຫົວໜ່ວຍງົບປະມານຂັ້ນເມືອງ. ສ່ວນຂັ້ນບ້ານ ເປັນຫົວໜ່ວຍຮາກຖານ ໃນການເກັບລາຍຮັບ ແລະ ປະຕິບັດລາຍຈ່າຍ ຕາມກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງອົງການປົກຄອງເມືອງ, ເທດສະບານ, ນະຄອນ.

ການເງິນຂອງອົງການປົກຄອງທ້ອງຖິ່ນ ຕ້ອງປະຕິບັດຕາມຫຼັກການລວມສູນງົບປະມານແຫ່ງລັດ, ງົບປະມານທ້ອງຖິ່ນ ແລະ ຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

ຜູ້ສັ່ງການການເງິນຂອງອົງການປົກຄອງຂັ້ນແຂວງ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຫຼື ຜູ້ໄດ້ຮັບມອບສິດຕາມລະບຽບການ.

ຜູ້ສັ່ງການ ການເງິນຂອງອົງການປົກຄອງຂັ້ນເມືອງ ແມ່ນເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຫຼື ຜູ້ໄດ້ຮັບມອບສິດຕາມລະບຽບການ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 94 ຕາປະທັບ**

ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ມີຕາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ.

**ມາດຕາ 95 (ປັບປຸງ) ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສປປ ລາວ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 96 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້